ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ແຜນການຕຽມພ້ອມຕ້ານໄພນ້ຳຖ້ວມ

# ແຂວງຄຳມ່ວນ




ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ
2007

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

--------------------------

# ແຜນກຽມພ້ອມຕ້ານໄພນ້ຳຖ້ວມ

# ແຂວງຄຳມ່ວນປະຈຳສົກປີ : 2007 - 2008

********************

- **ອີງໃສ່ : ແຜນຍຸດທະສາດຄຸ້ມຄອງຄວາມສ່ຽງໄພພິບັດ ສປປ ລາວ**
- **ອີງໃສ່ : ແຜນຍຸດທະສາດຄຸ້ມຄອງຄວາມສ່ຽງໄພພິບັດແຂວງຄຳມ່ວນ ປະຈຳສົກປີ (2006 - 2010)**
- **ອີງໃສ່ : ແຜນພັດທະນາເສດຖະກິດ - ສັງຄົມແຂວງຄຳມ່ວນ (2006 - 2010)**

## 1. ພາກສະເໜີ

### 1.1 ສະພາບຄວາເປັນມາ

ແຂວງຄຳມ່ວນ ແມ່ນແຂວງໜຶ່ງທີ່ຕັ້ງຢູ່ພາກກາງຂອງ ສປປ ລາວ ແລະ ກໍ່ແມ່ນແຂວງໜຶ່ງທີເກີດມີໄພພິບັດ ແລະ ໄພທຳມະຊາດເກີດຂື້ນເຊັ່ນ : ໄພນ້ຳຖ້ວມ, ນ້ຳເຊບັ້ງໄຟຂື້ນ, ລົມພະຍຸ ແລະ ໄພແຫ້ແລ້ງ ບາງປີຍັງມີໄພອັນຕະລາຍຕາມມາຄື : ພະຍາດລະບາດຂອງສັດ ແລະ ຄົນ ນອກຈາກໄພພິບັດຈາກທຳມະຊາດນີ້ແລ້ວຍັງມີໄພພິບັດຈາກມະນຸດສ້າງຂື້ນອີກເຊັ່ນ : ອັກຄີໄພ (ໄພໃໝ້ເຮືອນ) ແລະ ລະເບີດບໍ່ທັນແຕກຍັງຕົກຄ້າງໃນຂອບເຂດ 6 ຕົວເມືອງ (ເມືອງບົວລະພາ, ເມືອງນາກາຍ ເມືອງຍົມມະລາດ ເມືອງມະຫາໄຊ ເມືອງໄຊບົວທອງ ແລະ ເມືອງເຊບັ້ງໄຟ

### 1.2 ປະສົບການໄພນ້ຳຖ້ວມ

ໃນຊຸມປີຜ່ານມາ ແຂວງຄຳມ່ວນຖືວ່າເປັນແຂວງໜຶ່ງ ທີ່ເກີດໄພນ້ຳຖ້ວມຂື້ນເປັນຈຳທຸກໆປີ ແຕກຕ່າງພຽງແຕ່ປີຄ່ອຍ ປີແຮງເທົ່ານັ້ນ ແຕ່ຮ້າຍແຮ້ງເກົ່າໝູ່ແມ່ນສົກປີ : 2004 - 2005 ມີປະຊາຊົນຖືກຜົນກະທົບຈຳນວນ 26.219 ຄອບຄົວ 517 ບ້ານ, ຈຳນວນພົນ 144.097 ຄົນ, ເນື້ອທີ່ນ້ຳຖ້ວມນາປີຖືກເສຍຫາຍ 22.991 ຮຕ, ເນື້ອທີປູກພືດເສຍຫາຍ 53.361 ຮຕ

**ຕາຕະລາງສັງລວມເນື້ອທີ່ນ້ຳຖ້ວມແຕ່ລິກປີ : 2000 - 2005**

| ລ/ດ | ເນື້ອໃນລາຍການ | ເນື້ອທີນ້ຳຖ້ວມ( ຮຕ ) | ເນື້ອທີປູກຝັງ( ຮຕ ) |
|---|---|---|---|
| 1 | ນ້ຳຖ້ວມປີ 2000 | 19,978 | 48,225 |
| 2 | ນ້ຳຖ້ວມປີ 2001 | 14,440 | 49,397 |
| 3 | ນ້ຳຖ້ວມປີ 2002 | 11,430 | 52,258 |
| 4 | ນ້ຳຖ້ວມປີ 2003 | 00 | 50,760 |
| 5 | ນ້ຳຖ້ວມປີ 2004 | 11,850 | 51,474 |
| 6 | ນ້ຳຖ້ວມປີ 2005 | 22.991 | 53,361 |

## 1.3 ຈຸດປະສົງ ແລະ ຍຸດທະສາດ

### 1.3.1 ຈຸດປະສົງ

1. ເພື່ອເພີ້ມຄວາມຮູ້ພື້ນຖານທາງດ້ານວຽກງານປ້ອງກັນໄພພິບັດໃຫ້ປະຊາຊົນເຂົ້າໃຈໂດຍແນ່ໃສ່ໃຫ້ເຂົາເຈົ້າເປັນເຈົ້າການແກ້ໄຂບັນຫາໄພພິບັດທີ່ເກີດຂືນແຕ່ລະຄັ້ງ.
2. ສ້າງໃຫ້ພະນັກງານຂອງລັດ ລະດັບແຂວງ ແລະ ລະດັບເມືອງ ມີຄວາມຮູ້ພື້ນຖານດ້ານວຽກງານຄຸ້ມຄອງ ແລະ ເຄື່ອນໄຫວສຶກສາອົບຮົມ ໂຄສະນາໃຫ້ຊຸມຊົນຮູ້ ເຂົ້າໃນເຊື່ອມຊືມວິທີປ້ອງກັນກ່ອນເກີດໄພພິບັດ
3. ແນ່ໃສ່ສ້າງຄວາມຮູ້ພື້ນຖານໃຫ້ແກ່ຊຸມຊົນ ແລະ ເສດຖະກິດຂອງແຂວງ ມີຄວາມເຂັ້ມແຂງ ແລະ ຫຼຸດຜ່ອນຄວາມເສຍຫາຍຂອງຜົນກະທົບທີ່ເກີດຂຶ້ນຈາກໄພທຳມະຊາດ ຫຼື ຄືນສ້າງຂຶ້ນຮັບປະກັນໃນການພັດທະນາແບບຍືນຍົງ.
4. ເພື່ອເພີ້ມຄວາມສາມາດ ແລະ ຫຼຸດຜ່ອນຄວາມຕ້ານທານຕ່ຳໃນຂັ້ນຊຸມຊົນ ເພື່ອໃຫ້ເຂົາເຈົ້າເປັນເຈົ້າການໃນການແກ້ໄຂບັນຫາໄພພິບັດ ໃນເມື່ອເກີດຂຶ້ນ

### 1.3.2 ຍຸດທະສາດ

1. ຈາກປະສົບການ ແລະບົດຮຽນທີ່ໄດ້ພົບມາແຕ່ລະຄັ້ງມັກຮຽກຮ້ອງໃຫ້ອຳນາດການປົກແຂວງ, ເມືອງແລະ ປະຊາຊົນບັນເຜົ່າທົ່ວແຂວງ ມີຄວາມຈຳເປັນຕ້ອງໄດ້ມີຄວາມຮູ້ພື້ນຖານກ່ຽວກັບວຽກງານໄພພິບັດ ເພື່ອແນ່ໃສ່ການຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບຈາກໄພທຳຊາດ
2. ສ້າງກົນໄກ ແລະ ຊອກວິທີອັນໃໝ່ຈາກການແກ້ໄຂ, ການຊ່ວຍເຫຼືອບັນເທົາທຸກສຸກເສີນ ມາເປັນແຜນຍຸດທະສາດການທ້າງຫາກະກຽມ ເພື່ອຕອບໂຕ້ໄພພິບັດທີ່ອາດຈະເກີດຂຶ້ນແຕ່ລະຄັ້ງ ພ້ອມກັບການສືບຕໍ່ແກ້ໄຂບັນດາຜົນເສຍຫາຍຈາກຜົນກະທົບຂອງໄພພິບັດ ໃນແຕ່ລະຄັ້ງ
3. ເຮັດໃຫ້ສັງຄົມພາຍໃນແຂວງ ມີຄວາມປອດໄພໂດຍພື້ນຖານສາມາດຫຼຸດຜ່ອນເຖິງຂັ້ນຕ່ຳສຸດຜົນກະທົບຂອງໄພພິບັດຕໍ່ຊີວິດ, ເສດຖະກິດ, ຊັບສິນຂອງລັດ ແລະ ປະຊາຊົນ

4. ເຮັດໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດ ໄດ້ຮັບການຊ່ວຍເຫຼືອຢ່າງທ່ວງທັນ ແລະ ຮັບປະກັນການຟື້ນຟູການດຳລົງຊີວິດຂອງປະຊາຊົນກັບຄືນສູ່ສະພາບເດີມໂດຍໄວ

### 1.3.3 ຄາດໝາຍລວມ 5 ປີຂອງແຂວງ 2006 - 2010

1. ສືບຕໍ່ເຮັດໃຫ້ແຂວງຄຳມ່ວນ ມີຄວາມສະຫງົບທາງການເມືອງ, ມີຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ ຢ່າງໜັກແໜ້ນ ແລະ ສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ. ພ້ອມກັນນັ້ນ, ກໍ່ເອົາໃຈໃສ່ສ້າງບຸກຄະລາກອນໃຫ້ເນືອງພໍກັບຄວາມຮຽກຮ້ອງຕ້ອງການ.
2. ສູ້ຊົນຮອດປີ 2010 ຕ້ອງຢຸດຕິການຖາງປ່າດົງດິບເຮັດໄຮ່,ຈັດສັນອາຊີບຂອງປະຊາຊົນເຂດພູດອຍ ໃຫ້ມີຄວາມສະຫງົບ. ພັດທະນາພື້ນຖານເສດຖະກິດໃຫ້ຂະຫຍາຍຕົວ ໃນລະດັບ 7 - 8 % ຕໍ່ປີ, ສະເລ່ຍລາຍໄດ້ 400 - 450 ໂດລາຕໍ່ຄົນຕໍ່ປີ, ແກ້ໄຂຄວາມຫຍຸ້ງຍາກຂອງປະຊາຊົນໃຫ້ໄດ້ໂດຍພື້ນຖານ.
3. ຈັດຕັ້ງປະຕິບັດການສຶກສາຊັ້ນປະຖົມພາກບັງຄັບ, ຂະຫຍາຍການສຶກສາໄປສູ່ຊົນນະບົດຫ່າງໄກສອກຫລີກ, ເຮັດໃຫ້ອັດຕາເຂົ້າຮຽນສຸດທິບັນລຸ 95%, ອັດຕາການປະລະການຮຽນກາງປີໃຫ້ຕ່ຳກວ່າ 2%.
4. ສືບຕໍ່ວຽກງານແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຕື່ມອີກປະມານ 70-80% ຂອງຈຳນວນ ຄອບຄົວ ທຸກຍາກ ທີ່ຍັງເຫຼືອໃນປະຈຸບັນ.
5. ສືບຕໍ່ສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍແຜນການ-ການເງິນ, ບ້ານເປັນຫົວໜ່ວຍຈັດຕັ້ງປະຕິບັດ.

### 1.3.4. ຄາດໝາຍສູ້ຊົນ ດ້ານເສດຖະກິດມະຫາພາກ 5 ປີຂອງແຂວງ 2006 - 2010

ພື້ນຖານເສດຖະກິດ ຂອງແຂວງຄຳມ່ວນ ໂດຍພື້ນຖານແລ້ວຍັງແມ່ນກະສິກຳ-ປ່າໄມ້ກວມສ່ວນໃຫຍ່. ດັ່ງນັ້ນໃນຊຸມປີຕໍ່ໜ້າແມ່ນເອົາໃຈໃສ່ຢ່າງແຂງແຮງຕໍ່ການພັດທະນາຂະແໜງກະສິກຳ - ປ່າໄມ້ຕິດພັນກັບອຸດສາຫະກຳ ແລະບໍລິການ, ສ້າງພື້ນຖານໂຄງລ່າງເສດຖະກິດ ວັດທະນະທຳ - ວິທະຍາສາດ ເຕັກໂນໂລຊີ ເທື່ອລະກ້າວເພື່ອຮອງຮັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝຮອດປີ 2010 ໄດ້ຄາດຄະເນຕົວເລກຄາດໝາຍສູ້ຊົນທາງດ້ານມະຫາພາກໄວ້ດັ່ງນີ້: ເສດຖະກິດຂະຫຍາຍຕົວສະເລ່ຍ 8-10%/ປີ ລວມຍອດຜະລິດຕະພັນພາຍໃນສາມາດບັນລຸ ໄດ້ປະມານ 3.554,29 ຕື້ກີບ ໃນປີ 2010, ໃນນັ້ນ:

- ຜະລິດຕະພັນກະສິກຳ-ປ່າໄມ້ 1.421,72 ຕື້ກີບ,ເພີ້ມຂື້ນປະມານ 6-8%/ປີ,ກວມ40%ຂອງ GDP.
- ຜະລິດຕະພັນອຸດສາຫະກຳ-ຫັດຖະກຳ 1.350,63 ຕື້ກີບ, ເພີ້ມຂື້ນປະມານ 12-14%/ປີ, ກວມ 38 % GDP.

- ຜະລິດຕະພັນການບໍລິການ 781,94 ຕື້ກີບ,ເພີ້ມຂື້ນປະມານ 10,2%/ປີ,ກວມ 22% ຂອງ GDP.
+ ສູ້ຊົນສ້າງລາຍຮັບເຂົ້າປະມານ ໃຫ້ໄດ້ປະມານ 10-12 %ຂອງ GDP/ ປີ ຫຼືລື່ນແຜນການ.
+ ການລົງທຶນທັງໝົດທົ່ວສັງຄົມກວມປະມານ 25 - 30% ຂອງ GDPຕໍ່ປີ.
+ ຮອດປີ 2010 ຄາດວ່າພົນລະເມືອງຂອງແຂວງຈະມີ: 381.726 ຄົນ, (ດ້ວຍອັດຕາຂະຫຍາຍ 2,5%/ປີ). ຄາດວ່າລວມຍອດຜະລິດຕະພັນພາຍໃນສະເລ່ຍໃສ່ຫົວຄົນຈະໄດ້ປະມານ 9.000.000 - 9.500.000 ກີບ, ຄິດ ເປັນເງິນໂດາເທົ່າກັບ 800 - 900 ໂດລາ/ຄົນ/ປີ (ອັດຕາແລກປ່ຽນປີ 2004 10.631ກີບ/1 USD) ຄວບຄຸມ ແລະ ຮັກສາອັດຕາແລກປ່ຽນໃຫ້ຢູ່ໃນລະດັບປົກກະຕິ, ອັດຕາເງິນ ເຟີ້ສເລັ່ຍໃຫ້ຢູ່ໃນລະດັບ 7%.

### 1.3.5 ຄາດໝາຍວຽກງານລຶບລ້າງຄວາມທຸກຍາກ 5 ປີຂອງແຂວງ 2006 - 2010

#### 1.3.5.1. ວຽກງານລຶບລ້າງຄວາມທຸກຍາກ:

ມາຮອດປະຈຸບັນ ທົ່ວແຂວງຍັງຄອບຄົວທຸກຍາກຢູ່ປະມານ 6,30% ກ່ວາຂອງຄອບຄົວທັງໝົດໃນທົ່ວແຂວງ ໂດຍຈະສຸມໃສ່ 2 ເຂດໃຫຍ່, ຄື:

ເຂດພູດອຍຫ່າງໄກຊອກຫລີກ: ແມ່ນ 2 ເມືອງຄື: ບົວລະພາ ແລະນາກາຍ. ເປັນເມືອງທຸກຍາກຫຼາຍ ຍັງຂາດ ເງື່ອນໄຂພື້ນຖານ ໂຄງລ່າງທີ່ຈຳເປັນ ຊຶ່ງເປັນອຸປະສັກ ຕໍ່ການເຂົ້າເຖິງຕະຫລາດ, ຂ່າວສານ, ເຕັກໂນໂລຊີ ແລະ ປັດໃຈການພັດທະນາອື່ນໆ ເພື່ອຫລຸດຜ່ອນຄວາມທຸກຍາກ ໃນບັນດາ ເມືອງ ເຂດຫ່າງໄກສອກຫຼີກດັ່ງກ່າວ ແຕ່ນີ້ ຮອດປີ 2010 ໄດ້ກຳນົດຄາດໝາຍ ສູ້ຊົນລຶບລ້າງ ຄວາມທຸກ ຍາກ ໃຫ້ໄດ້ 70-80 % ຂອງຄອບຄົວທຸກຍາກທີ່ມີ ໃນປະຈຸບັນ, ໄດ້ວາງເປົ້າໝາຍທີ່ຈະເພີ້ມລາຍຮັບໃຫ້ຄອບຄົວຊາວກະສິກອນຂື້ນ ໂດຍການຊຸກຍູ້ການສ້າງຕັ້ງ ກອງທຶນ ພັດທະນາບ້ານ (ກພບ) ທີ່ມີເງື່ອນໄຂ, ເນັ້ນໃສ່ສົ່ງເສີມການຜະລິດກະສິກຳແບບປະສົມປະສານ, ພັດທະນາການຄຸ້ມຄອງ, ການເຮັດກະສິກຳແບບຮອບວຽນ, ຊຸກຍູ້ຢ່າງແຂງແຮງການປູກຝັງລ້ຽງສັດ ເພື່ອຕອບສະໜອງພາຍໃນຄອບຄົວ ແລະ ສ່ວນເຫຼືອເປັນສິນຄ້າຂາຍອອກ ເປັນຕົ້ນແມ່ນການປູກເຂົ້າ, ລ້ຽງສັດໃຫຍ່ ແລະ ປູກຕົ້ນໄມ້ກິນໝາກ. ຝຶກອົບຮົມວິທີການນຳໃຊ້ເຕັກນິກໃໝ່ເຂົ້າໃນການຜະລິດ, ການເຂົ້າສູ່ຕະລາດ ແລະ ຮູ້ວິທີການຊື້ - ຂາຍ. ສູ້ຊົນເພື່ອຈັດສັນອາຊີບໃໝ່ ໃຫ້ແກ່ຊາວກະສິກອນຢູ່ຊົນນະບົດ ໂດຍການດຸນດ່ຽງເນື້ອທີ່ປູກຝັງ ໃຫ້ຄອບຄົວທີ່ທຸກຍາກ ໄດ້ມີທີ່ດິນສຳລັບການປູກພືດພັນທັນຍາຫານ ມີຄວາມສາມາດ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງຄອບຄົວ, ຈັດສັນເນື້ອທີ່ທຳການຜະລິດ ແລະ ທີ່ຢູ່ອາໃສໃຫ້ແກ່ຄອບຄົວທຸກຍາກ. ສຳຫລວດຈັດສັນ ແລະ ກຳນົດເຂດປູກໄມ້ອຸດ

ສາຫະກຳ ແລະສົ່ງເສີມທາງດ້ານທຶນຮອນ, ສ້າງຄອບຄົວຕົວແບບການ ຜະລິດສິນຄ້າ, ການບໍລິການ ເພື່ອສົ່ງເສີມ ແຂ່ງຂັນກັນສ້າງຜະລິດຕະພັນ ປາຍແຫລມຂອງບ້ານໃຫ້ເປັນຂະບວນກ້ວາງຂວາງ. ສືບຕໍ່ລົງ ທຶນກໍ່ສ້າງພື້ນ ຖານໂຄງລ່າງ ສົ່ງເສີມຄວາມ ຮູ້ແກ່ປະຊາຊົນ ໃນການຜະລິດສິນຄ້າ, ນອກນັ້ນ ກໍ່ເອົາໃຈໃສ່ຈັດຕັ້ງ ການສົ່ງເສີມຢ່າງຕັ້ງໜ້າຕໍ່ພາກເອກະຊົນ ນັບທັງ ຄອບຄົວໃນແຕ່ລະບ້ານ ໃນການຜະລິດສິນຄ້າ ແລະ ບໍລິການທີ່ມີທ່າແຮງໃນດ້ານກະສິກຳ -ປ່າໄມ້, ຫັດຖະກຳທີ່ເປັນມູນເຊື້ອ. ເພື່ອສ້າງ ແລະ ຖອດຖອນບົດຮຽນໃຫ້ແກ່ການປະຕິບັດຢູ່ໃນເມືອງອື່ນໆ. ຄາດວ່າຈະນຳໃຊ້ທຶນເຂົ້າໃສ່ແຜນງານນີ້ມີ 26 ໂຄງການ, ມູນຄ່າ 26,72 ຕື້ກີບ.

ເຂດທົ່ງພຽງ: ເປັນເຂດທີ່ມີທ່າແຮງຫລາຍເປັນຕົ້ນແມ່ນເຂດ 3 ຕົວເມືອງ ຍັງມີຄອບຄົວທີ່ຍັງບໍ່ທັນຫຼຸດພົ້ນ ອອກຈາກຄວາມ ທຸກຍາກຢູ່, ມີທ່າແຮງໃນການຜະລິດກະສິກຳ, ລ້ຽງສັດ ແລະ ສິນຄ້າອື່ນໆ, ມີເງື່ອນໄຂໂຄງລ່າງ ພື້ນຖານສະດວກກ່ວາ. ຮອດປີ 2010 ຈະສູ້ຊົນຫລຸດຜ່ອນຄອບຄົວທຸກຍາກໃຫ້ໄດ້ 95% ຂອງຄອບຄົວທຸກຍາກ ໃນຂົງເຂດນີ້. ໂດຍສົ່ງເສີມການຜະລິດສະບຽງອາຫານ, ຜະລິດເປັນສິນຄ້າ ແລະ ພັດທະນາການບໍລິການ ສືບຕໍ່ພັດທະນາເຂດທົ່ງພຽງໃຫ້ກາຍເປັນສູນກາງດ້ານເສດຖະ ກິດ-ການ ເງິນ, ດ້ານການບໍລິການ, ວັດທະນະທຳ-ສັງຄົມ ແລະ ວິທະຍາສາດ ເຕັກໂນໂລຊີ ທີ່ທັນສະໄໝເທື່ອ ລະກ້າວ. ຢາກບັນລຸເປົ້າໝາຍຄືຂ້າງເທິງຕ້ອງເອົາໃຈໃສ່ບາງວຽກງານແລະໂຄງການທີ່ເປັນບູລິມະສິດດັ່ງນີ້:

+ ໂຄງການບູລິມະສິດທັງໝົດ ມີ 69 ໂຄງການ, ມູນຄ່າ 156,74 ຕື້ກີບ. ໃນນັ້ນ :
- ໂຄງການສົ່ງເສີມລາຍໄດ້: ມີ 27 ໂຄງການ, ມູນຄ່າ 13,12 ຕື້ກີບ
- ໂຄງການສົ່ງເສີມວິຊາການ: ມີ 20 ໂຄງການ, ມູນຄ່າ 5,80 ຕື້ກີບ.
- ພັດທະນາພື້ນຖານໂຄງລ່າງ: ມີ 22 ໂຄງການ, ມູນຄ່າ 137,82 ຕື້ກີບ.

## 1.4 ຄວາມຮັບຜິດຊອບ ແລະ ສິດຂອງເຂດຂອງແຜນການ

### 1.4.1 ພາລະບົດບາດຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ

- **ສິດ ແລະ ໜ້າທີ່ ປະທານຊີ້ນຳຄະນະກຳມະການຄຸ້ມຄອງໄພພິບັດ.**
  1. ຮຽກປະຊຸມສາມັນ ແລະ ວິສາມັນ.
  2. ເປັນປະທານກອງປະຊຸມ.
  3. ຊີ້ນຳລວມ ສະພາບໄພພິບັດທີ່ເກີດຂື້ນພາຍໃນແຂວງ ເພື່ອລາຍງານເຈົ້າແຂວງ.
  4. ມີສິດແຕ່ງຕັ້ງແລະມອບໝາຍວຽກໃຫ້ຮອງປະທານວ່າການແທນໃນເວລາຕິດພາລະກິດທາງລັດຖະການ.
- **ວ່າດ້ວຍໜ້າທີ່ຂອງຮອງປະທານຊີ້ນຳຄະນະກຳມະການຄຸ້ມຄອງໄພພິບັດ.**
  1. ເຮັດວຽກຕາມການມອບໝາຍຂອງປະທານຊີ້ນຳຄະນະກຳມະການຄຸ້ມຄອງໄພພິບັດ.

2. ສັງລວມຂໍ້ມູນກ່ຽວກັບສະພາບການຄຸ້ມຄອງໄພພິບັດຂັ້ນແຂວງ ເພື່ອລາຍງານ

- **ວ່າດ້ວຍໜ້າທີ່ຂອງຄະນະກຳມະການ.**

1. ຄະນະກຳມະການຈາກພະແນກກະສິກຳ-ປ່າໄມ້,ພະແນກ ຄຂປກ ແລະ ຖະແຫຼງຂ່າວ ວັດທະນະທຳ ມີໜ້າທີ່ຈັດຕັ້ງດຳເນີນການຕິດຕາມ, ແຈ້ງຂ່າວ, ເຕືອນໄພ, ໃຫ້ຂໍ້ແນະນຳ ແລະ ສຶກສາຊຸມຊົນ.
2. ຄະນະກຳມະການພະແນກສຶກສາມີໜ້າທີ່ຈັດຕັ້ງປະຕິບັດການອົບຮົມໃຫ້ແກ່ ຄູອາຈານ ແລະ ນັກຮຽນ ຮັບຮູ້ກ່ຽວກັບວຽກງານຄຸ້ມຄອງໄພພິບັດແລະນຳໄຊ້ຕຳລາການສິດສອນກ່ຽວກັບວຽກງານຄຸ້ມຄອງໄພພິບັດເຂົ້າໃນໂຮງຮຽນພົວພັນເພື່ອແຕ່ງຕັ້ງຄູຮັບຜິດຊອບວຽກງານຄຸ້ມຄອງໄພພິບັດຢູ່ບັນດາໂຮງຮຽນໂຮງຮຽນຕ່າງໆ.
3. ຄະນະກຳມະການຈາກພະແນກສາທາລະນະສຸກແຂວງ ມີໜ້າທີ່ຈັດຕັ້ງໜ່ວຍງານວິຊາສະເພະເພື່ອຮັບໄຊ້ໃຫ້ແກ່ການທ້າງທາກະກຽມຕ້ານໄພພິບັດໃນ 3 ໄລຍະ (ປະຖົມພະຍາບານ, ສຸຂະສຶກສາ ແລະອານາໄມສິ່ງແວດລ້ອມ. ຄະນະກຳມະການຈາກ ກອງບັນຊາການ ປ ກ ສ ແຂວງ ມີໜ້າທີ່ຈັດຕັ້ງການນຳໄຊ້ກຳລັງ ກອງບັນຊາການ ປ ກ ສວິຊາສະເພາະເພື່ອເຂົ້າຮ່ວມໃນການຄົ້ນຫາ, ກູ້ໄພ ແລະຮັກສາຄວາມສະຫງົບຝນເມື່ອ ມີໄພພິບັດເກີດຂື້ນ.
6. ຄະນະກຳມະການມາຈາກກອງບັນຊາການທະຫານແຂວງ ມີໜ້າທີ່ ໃນການຈັດຕັ້ງ ແລະ ນຳໃຊ້ກຳລັງເຂົ້າ ໃນການ ເຄື່ອນຍ້າຍ ປະຊາຊົນອອກຈາກພື້ນທີ່ ມີອັນຕະລາຍ.
7. ຄະນະກຳມະການຈາກພະແນກການເງິນ, ພະແນກແຜນການ ແລະ ການລົງທຶນ,ກາແດງ ແລະອຸດສາຫະກຳແລະການຄ້າ ແຂວງ ມີໜ້າທີ່ຈັດຕັ້ງການຊອກຫາແຫລ່ງທຶນແລະເຄື່ອງຊ່ວຍເຫລືອບັນເທົາທຸກ ເພື່ອມາຈັດຕັ້ງ ບັນດາກິດ ຈະກຳຂອງວຽກງານຄຸ້ມຄອງໄພພິບັດ.
8. ຄະນະກຳມະການຈາກອົງການຈັດຕັ້ງຊາວໜຸ່ມ, ແນວລາວສ້າງຊາດ ແລະ ແມ່ຍິງມີໜ້າທີ່ຈັດຕັ້ງລະດົມກ້ອນກຳລັງເຂົ້າໃນກິດຈະກຳຊ່ວຍເຫຼືອສຸກເສີນ.
9. ຄະນະກຳມະການຈາກພະແນກແຜນການ ແລະ ການລົງທຶນແຂວມີໜ້າທີ່ໃນການເຊື່ອມຕໍ່ວຽກງານໄພພິບັດເຂົ້າໃນແຜນພັດທະນາຂອງແຂວງ.
10 ຄະນະກຳມະການຈາກພະແນກພະລັງງານແລະ ບໍ່ແຮ່ ມີໜ້າທີ່ໃນການກວດກາລະບົບຄວາມປອດໄພໃນບັນດາ ໂຮງງານ ສິ່ງເສດເຫຼືອທີ່ກະທົບໃສ່ສິ່ງແວດລ້ອມ ແລະກຳມະກອນ.

- **ວ່າດ້ວຍບົດບາດ ແລະ ໜ້າທີ່ຂອງກອງເລຂາ.**
    1. ຕິດຕາມ ແລະ ປະສານງານກັບພາກສ່ວນທີ່ກ່ຽວຂ້ອງພາຍໃນແຂວງ.
    2. ເກັບກຳ,ສັງລວມຂໍ້ມູນ ໄພອັນຕະລາຍ,ໄພພິບັດຄວາມສາມາດ ແລະ ຄວາມຕ້ານທານຕ່ຳພາຍໃນແຂວງ, ລາຍງານໃຫ້ຄະນະຊີ້ນຳ ແລະ ໂຄງການ.
    3. ເປັນເສນາທິການໃຫ້ແກ່ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ.
    4. ຜູ້ປະຈຳການ ແລະ ປະສານງານກັບຄະນະກຳມະການຕ່າງໆ ເພື່ອຈັດຕັ້ງປະຕິບັດວຽກງານຄຸ້ມຄອງໄພບັດໃຫ້ມີປະສິດທິຜົນ.
    2. ເປັນຜູ້ລົງຊ່ວຍເຫຼືອ ຄຄພມ ແລະ ຂັ້ນບ້ານໃນການເກັບກຳຂໍ້ມູນ ປະເມີນສະພາບໄພພິບັດໃນ ຊຸມຊົນແລະ ສະໜັບສະໜູນການວາງແຜນ ຫລຸດຜ່ອນຄວາມສ່ຽງຈາກໄພພິບັດໃນຂັ້ນບ້ານ.
    6. ເຂົ້າຮ່ວມກອງປະຊຸມການວາງແຜນ, ສະຫຼຸບຜົນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການປະຈຳອາທິດ, ເດືອນໄຕມາດແລະປະຈຳປີ ລາຍງານຄະນະຊີ້ນຳຂັ້ນແຂວງ ແລະໂຄງການ ຢ່າງ ເປັນປົກະຕິ.
    7. ກອງເລຂາທີ່ຕັ້ງເປັນບ່ອນປະຈຳການຢູ່ພະແນກແຮງງານແລະສະຫວັດດີການສັງຄົມແຂວງ.

## 1.5 ວັນ ເດືອນ ປີ ກະກຽມແຜນການ ແລະ ບັນທຶກການປັບປຸງ

- ວັນ ເດືອນ ປີ ກະກຽມແຜນການ ວັນທີ 23.8.2007
- ວັນ ເດືອນ ປີ ໝົດອາຍຸ ປີ 2008
- ວັນເດືອນປີ ປັບປຸງແຜນການແມ່ນຫຼັງຈາກສິ້ນສຸດໂຄງການທ້າຍ ປີ 2008

# 2. ສະເໜີຫຍໍ້ກ່ຽວກັບສະພາບຂອງແຂວງ

## 2.1 ພື້ນທີ່ກວມລວມ

ແຂວງຄຳມ່ວນປະກອບມີ 9 ຕົວເມືອງ, ມີເນື້ອທີ່ທັງໝົດ 16.315 ກລມ2, ມີ 803 ບ້ານ, 61.364 ຄົວເຮືອນ, ມີພົນລະເມືອງ 337.390 ຄົນ, ຍິງ 171.825 ຄົນ ,

- ທິດເໜືອ : ຕິດກັບແຂວງບໍລິຄຳໄຊ (ເມືອງຄຳເກີດ ແລະ ເມືອງປາກກະດິງ)
- ທິດໃຕ້ : ຕິດກັບແຂວງສະຫັວນນະເຂດ (ເມືອງວິລະບຸລີ ແລະ ເມືອງໄຊບູລີ)
- ທິດຕາວັນອອກ : ຕິດກັບ ສສ ຫວຽດນາມ
- ທິດຕາວັນຕົກ : ຕິດກັບປະເທດໄທ (ນະຄອນພະນົມ)

ê‰¸Á¢¸¤´ó ®É¾-ê†µøÈÃ-À¢©Àê©¦½®¾-À´õº¤´ó 88 ®É¾-,µøÈÀ¢©§ö--½®ö© 522 ®É¾-, Áì½ ®É¾-µøÈÀ¢©¹È¾¤Ä¡§º¡Íó¡ 193 ®É¾-. ´ó®É¾-ê†Ä©ÉÃ§ÉÄ³³É¾ÁìÉ¸¥¿-¸- 455 ®É¾-,´ó-Õ¯½¯¾Ã§É ¥¿-¸- 39 ®É¾-,

**ຕາຕະລາງສັງລວມຂໍ້ມູນຈຳນວນປະຊາກອນພາຍໃນແຂວງປີ 2007**

| ຊື່ເມືອງ | ເນື້ອທີ່ ກລມ2 | ບ້ານ | ພົນລະເມືອງ | | ຄວາມໜາ ແໜ້ນ | ແມ່ນ້ຳ |
|---|---|---|---|---|---|---|
| | | | ລວມ | ຍິງ | | |
| ເມືອງທ່າແຂກ | 918 | 141 | 83.957 | 42.965 | 91,46 | ນ້ຳຂອງ ນ້ຳໂດນ |
| ເມືອງມະຫາໄຊ | 1.409 | 89 | 30.919 | 15.721 | 21,94 | ນ້ຳເຊບັ້ງໄຟ |
| ເມືອງໜອງບົກ | 321 | 72 | 41.243 | 20.920 | 128,48 | ນ້ຳຂອງ,ນ້ຳເຊບັ້ງໄຟ |
| ເມືອງຫີນບູນ | 3.011 | 166 | 62.030 | 31.121 | 20,60 | ນ້ຳຂອງ,ນ້ຳຫີນບູນ |
| ເມືອງຍົມມະລາດ | 1.438 | 74 | 27.699 | 14.348 | 19,26 | ນ້ຳຍົມ |
| ເມືອງບົວລະພາ | 3.166 | 81 | 25.089 | 13.010 | 7,92 | ນ້ຳເຊ ,ນ້ຳພະນັງ |
| ເມືອງນາກາຍ | 4.173 | 65 | 20.245 | 10.253 | 4,85 | ນ້ຳເທີນ |
| ເມືອງເຊບັ້ງໄຟ | 966 | 50 | 25.504 | 13.021 | 26,40 | ນ້ຳເຊບັ້ງໄຟ ເຊນ້ອຍ |
| ເມືອງໄຊບົວທອງ | 913 | 65 | 20.704 | 10.466 | 22,68 | ນ້ຳເຊນ້ອຍ |
| **ລວມ** | **16.315** | **803** | **337.390** | **171.825** | **20,68** | |

## 2.2 ຈຸດພິເສດ ແລະ ພູມສັນຖານ

ດ້ານສະພາບພູມສັນຖານມີສາຍພູຫລວງເປັນບ່ອນອີງ ລະດັບສູງກໍ່ຄ່ອຍໆລຸດລົງຕາມທິດເວັນອອກຫາທິດຕາເວັນຕົກ ໄດ້ແບ່ງອອກເປັນ 3 ເຂດລະບົບນິເວດຄື: ເຂດພູດອຍ, ພູພຽງ ແລະ ເຂດທົ່ງພຽງ. ເຊິ່ງແຕ່ລະເຂດ ມີລັກສະນະພິເສດ ທາງດ້ານຊັບພະຍາກອນທຳມະຊາດແຕກຕ່າງກັນເຊັ່ນ:

- ***ເຂດພູດອຍ :*** ກວມເອົາ 35% ຂອງເນື້ອທີ່ທັງຫມົດໃນແຂວງ ກວມເອົາສ່ວນໜຶ່ງຂອງ ເມືອງນາກາຍ, ຍົມ ມະລາດ ແລະເມືອງບົວລະພາ, ເຊິ່ງພູມສັນຖານໄດ້ຖືກຕັດແບ່ງຢ່າງຈະແຈ້ງ ເປັນລ້ອງທີ່ແຄບນ້ອຍ ຍາວໄປຕາມ ສາຍນ້ຳຕ່າງໆ. ທິດຕາເວັນຕົກມີພູມສັນຖານເປັນທົ່ງກວ້າງ, ມີລັກສະນະລຸບໂນນ ເປັນຄື້ນສະລັບກັນ ເຮັດໃຫ້ນ້ຳ ໄຫລສະດວກ ເໝາະສົມໃຫ້ແກ່ການປູກຕົ້ນໄມ້ກິນໝາກ, ຕົ້ນໄມ້ອຸດສາຫະກຳໄລຍະຍາວ ແລະ ລ້ຽງສັດໃຫຍ່.

- ***ເຂດພູພຽງ*** : ກວມເອົາ 18,7% ຂອງເນື້ອທີ່ທົ່ວແຂວງ ກວມເອົາສ່ວນນຶ່ງຂອງເມືອງນາກາຍ, ຍົມມະລາດ ແລະ ເມືອງຫີນບູນ. ພູມສັນຖານປະກອບດ້ວຍ ບັນດາສາຍພູທີ່ຕ່ຳ ແລະ ປານກາງ, ສາຍພູຕ່ຳໄດ້ສະລັບຊັບຊ້ອນ ກັບບັນດາພູພຽງ ທີ່ຮາບພຽງດີສົມຄວນ. ເຂດນີ້ແມ່ນເໝາະສົມໃຫ້ແກ່ການປູກພືດ, ປູກຕົ້ນໄມ້ອຸດສາຫະກຳໃຫຍ່ໄວ ປະສານ ສົມທົບກັບວຽກງານກະສິກຳ - ປ່າໄມ້ ແລະ ການລ້ຽງສັດ.

- ***ເຂດທົ່ງພຽງ*** : ກວມປະມານ 46,3% ຂອງເນື້ອທີ່ທົ່ວແຂວງ ກວມເອົາເມືອງທ່າແຂກ, ໜອງ

ບົກ, ເຊບັ້ງໄຟ, ໄຊບົວທອງ ແລະ ສ່ວນໜຶ່ງຂອງເມືອງຫີນບູນ ເປັນເຂດທີ່ອຸດົມສົມບູນ, ພູມສັນຖານ ຮາບພຽງ,ມີທົ່ງກວ້າງຢູ່ລຽບຕາມແຄມນ້ຳເຊບັ້ງໄຟ ແລະ ແມ່ນ້ຳອື່ນໆ. ເປັນເຂດເໝາະສົມໃຫ້ແກ່ການຜະ ລິດກະສິກຳເປັນຕົ້ນແມ່ນການປູກຝັງແລະລ້ຽງສັດ,ອັນທີ່ພົ້ນເດັ່ນແມ່ນການປູກເຂົ້າແລະປູກພືດ ໄລຍະສັ້ນ.

### 2.2.1 ທ່າແຮທີ່ບົ່ມຊ້ອນຂອງແຂວງ

ແຂວງຄຳມ່ວນມີທ່າແຮງບົ່ມຊ້ອນທາງດ້ານຊັບພະຍາກອນທຳມະຊາດແລະວັດທະນະ ທຳຫຼາກ ຫຼາຍຊຶ່ງສະແດງອອກບາງດ້ານດັ່ງລຸ່ມນີ້:

- ***ດ້ານປ່າໄມ້ :*** ທົ່ວແຂວງມີເນື້ອທີ່ປ່າໄມ້ປະມານ 812,6 ພັນເຮັກຕາ ກວມປະມານ 8,9% ຂອງ ເນື້ອ ທີ່ທັງໝົດ, ໃນນັ້ນປ່າທຳມະຊາດ ປະມານ 175 ພັນເຮັກຕາ, ປ່າໂຄກ 527 ພັນເຮັກຕາ, ປ່າ ແປກ 46 ພັນເຮັກຕາ. ປະລິມານຂອງໄມ້ໃນປ່າດັ່ງກ່າວມີປະມານ 80 ລ້ານແມັດກ້ອນ. ໃນປ່າ ມີສັດ ແລະ ຕົ້ນໄມ້ຫລາຍຊະນິດ ທີ່ມີຄຸນຄ່າສູງ ແລະ ຫາຍາກ.
- ***ດ້ານດິນ :*** ທົ່ວແຂວງມີເນື້ອທີ່ດິນທຳການຜະລິດແລ້ວ 67.037 ຮຕ ແລະ ຍັງມີດິນເປົ່າຫວ່າງທີ່ສາມາດ ບຸກເບີກທຳການຜະລິດ ເປັນຈຳນວນຫຼວງຫຼາຍ. ອີງຕາມຄຸນນະພາບຂອງດິນໃນແຕ່ລະເຂດ ສາມາດຈັດເປັນ 31 ປະເພດ ດິນ ຊຶ່ງໄດ້ຮັບການແບ່ງປັນເປັນ 13 ໝວດຕົ້ນຕໍ ເປັນດິນທີ່ອຸດົມສົມບູນ ແລະແຈກຢາຍຢູ່ ຫລາຍເຂດຕ່າງກັນ ໃນເມື່ອສັງເກດຕີລາຄາບັນດາປັດໃຈສັງລວມເຊັ່ນ: ດິນຟ້າອາກາດ, ແຫລ່ງນ້ຳ ແລະ ອື່ນໆ ສາມາດຈັດສັນໂຄງປະກອບການຜະລິດຫລາຍຮູບແບບ ຊຶ່ງລວມມີ ປ່າ, ຕົ້ນໄມ່ອຸດສາຫະກຳໄລຍະ ຍາວ ແລະ ໄລຍະສັ້ນ, ເຂົ້າ, ທາດແປ້ງ, ລ້ຽງສັດ ແລະ ອື່ນໆ ໃນລະດັບໃຫຍ່ ຕາມທິດທາງການຜະລິດສິນ ຄ້າ.
- ***ດ້ານນ້ຳ :*** ແຂວງຄຳມ່ວນມີແມ່ນ້ຳລຳເຊຫລາຍສາຍໄຫລຜ່ານແຕ່ເໜືອຮອດໄຕ້ແລະສິ່ງສຳຄັນ ແມ່ນມີແມ່ນ້ຳໃຫຍ່ຫຼາຍສາຍທີ່ມີເງື່ອນໄຂເໝາະສົມ, ສະດວກແກ່ການສ້າງແຫຼ່ງຜະລິດພະລັງງານ ໄຟຟ້າຂະໜາດໃຫຍ່ໄດ້ ແລະມີເງື່ອນໄຂສະດວກໃນການສະໜອງນ້ຳໃຫ້ແກ່ການປູກຝັງແລະລ້ຽງສັດ
- ***ດ້ານແຮ່ທາດ :*** ມີແຮ່ທາດຫລາຍຊະນິດ, ອັນທີ່ພົ້ນເດັ່ນກວ່າຫມູ່ແມ່ນ ***ຫີນປູນ*** ທີ່ແຈກຢາຍຢູ່ ຕາມພື້ນທີ່ 560.000 ເຮັກຕາ ແລະ ມີປະລິມານຫລາຍຮ້ອຍລ້ານແມັດກ້ອນ, *ບໍ່ກົ່ວ* ມີປະລິມານ ປະມານ 800.000 ໂຕນ, *ບໍ່ຫີນກາວ* ປະມານ 500.000 ໂຕນ, *ຖ່ານຫີນ, ຟົດຟາດ, ບໍ່ເກືອ.*
- ***ດ້ານແຫຼ່ງທ່ອງທ່ຽວ :*** ທົ່ວແຂວງມີແຫຼ່ງທ່ອງທ່ຽວທັງໝົດ 124 ແຫ່ງ, ໃນນັ້ນ, ມີແຫຼ່ງທ່ອງທ່ຽວ ທາງວັດທະນະທຳ ແລະ ວັດຖຸບູຮານມີ 27 ແຫ່ງ, ແຫຼ່ງທ່ອງທ່ຽວທາງທຳມະຊາດມີ 96 ແຫ່ງ ແລະ ແຫຼ່ງທ່ອງທ່ຽວທາງປະຫວັດສາດ ມີ 01 ແຫ່ງ. ແຫຼ່ງທ່ອງທ່ຽວທີ່ໜ້າອັດສະຈັນກວ່າໝູ່ແມ່ນ ຖ້ຳປາຝາ ຢູ່ໃນເຂດບ້ານນາຂ້າງຊ້າງ ເຊິ່ງຢູ່ໃນຖ້ຳມີພະ ພຸດທະຮູບຈຳນວນ 229 ອົງ. ນອກນັ້ນ, ຖ້າໂຄງການກໍ່ສ້າງໄຟຟ້ານ້ຳເທີນ 2 ແລະ ໂຄງການກໍ່ສ້າງທາງເລກທີ່ 12 ສຳເລັດ ກໍ່ຈະເກີດມີ ແຫຼ່ງທ່ອງທ່ຽວທາງປະຫວັດສາດ ແລະທຳມະຊາດທີ່ໜ້າທ່ຽວຊົມຢູ່ຫລາຍແຫ່ງ ເປັນຕົ້ນແມ່ນ: ອ່າງ

ເກັບນ້ຳ ຂອງເຂື່ອນໄຟຟ້ານ້ຳເທີນ 2 ເຊິ່ງເປັນອ່າງທີ່ໃຫຍ່ ແລະ ກວ້າງຂວາງສຸດສາຍຕາ ຄ້າຍກັບທະເລ.

## 2.3 ລາຍລະອຽດຂອງການດຳລົງຊີວິດ

ແຂວງຄຳມ່ວນປະກອບມີ 3 ຊົນເຜົ່າຄື : ຊົນເຜົ່າລາວລຸ່ມ , ລາວເທິງ , ລາວສູງ ສ່ວນໃຫ່ຍອາຊີບຫຼັກແມ່ນເຮັດການຜະລິດເປັນຕົ້ນ : ເຮັດໄຮ່, ເຮັດນາແຊງ, ນາຕ່າວ, ລ້ຽງສັດ ແລະ ປູກພືດສຳຮອງຈຳນວນໜຶ່ງເຊັ່ນ ປູກສາລີ, ປູກມັນຕົ້ນ ແລະ ກິດຈຳກຳທີ່ສາມາດເຮັດເຂົາເຈົ້າມີລາຍຮັບສ່ວນຫຼາຍແມ່ນເຮັດນາ, ລ້ຽງສັດ.

## 2.4 ມະນຸດຊາດ

- ອັດຕາເພີ້ມຂື້ນຂອງປະຊາຊົນ 2,2 % (ຂໍ້ມູນຄິດໄລ່ປີ 2007)
- ຕົວເລກເສດຖະກິດ, GDP ຂະຫຍາຍຕົວໃນລະດັບ 8.7 % (ສົກປີ 2006-2007)
- ສະເລ່ຍລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ = 488.00 ໂດຮາ/ຄົນ/ປີ ຫຼື 4.935.626 ກີບ

## 2.5 ໂຄງສ້າງພື້ນຖານ

### 2.5.1 ຈຸດພິເສດທາງດ້ານຄົມມະນາຄົມ

ແຂວງຄຳມ່ວນຕັ້ງຢູ່ພາກກາງຂອງປະເທດລາວ ແລະ ເປັນບ່ອນທີ່ແຄບທີ່ສຸດນັບຈາກຊາຍແດນເບື້ອງຕາເວັນ ອອກ ຫາ ຊາຍແດນເບື້ອງຕາເວັນຕົກ, ແຂວງຄຳມ່ວນມີເສັ້ນທາງຫຼວງ ເລກທີ 13 ຍາວ 143 ກມ, ຊຶ່ງມີເສັ້ນທາງປູຢາງມີຄຸນນະພາບດີແຕ່ເຫນືອເຖິງໃຕ້, ມີເສັ້ນທາງເລກທີ 12 ແຕ່ທ່າແຂກເຖິງຊາຍແດນພາກຕາເວັນອອກ ໂດຍຜ່ານດ່ານຈາລໍ (ຫວຽດນາມ) ແລະ ທາງຫຼວງແຫ່ງຊາດ ເລກທີ 8B ໄປເຖິງທ່າເຮືອວຸ້ງອ້າງ, ມີເສັ້ນທາງຄົມມະນາຄົມແຕ່ແຂວງລົງຫາເມືອງທີ່ສາມາດທຽວໄດ້ 2 ລະດູ ແລະ ແຕ່ເມືອງ ລົງຫາບ້ານຈຳນວນໜຶ່ງ ກໍ່ມີຄວາມສະດວກສະບາຍສາມາດທຽວໄດ້ 2 ລະດູ ພ້ອມນັ້ນຍັງໄດ້ສ້າງເງື່ອນໄຂອຳນວຍ ຄວາມສະດວກສຳລັບການພັດທະນາການຜະລິດ ແລະ ຈໍລະຈອນສິນຄ້າ, ມີທ່າເຮືອຢູ່ແມ່ນ້ຳຂອງ ຊຶ່ງມີສາຍທາງນ້ຳຍາວ 153 ກມ , ມີເສັ້ນທາງຕິດຕໍ່ອອກໄປເຖິງ ທ່າກຳປັ່ນ ຢູ່ບາງກອກ (ປະເທດໄທ). ທີ່ຕັ້ງພູມສາດ ຄືດັ່ງທີ່ກ່າວມາຂ້າງເທິງນັ້ນ ເປັນສາຍເຫດໃຫ້ ແຂວງຄຳມ່ວນມີເງື່ອນໄຂສະດວກຫລາຍຢ່າງເພື່ອເສີມຂະຫຍາຍທ່າແຮງ, ປັບປຸງດ້ານອ່ອນ ເພື່ອຊຸກຍູ້ການຜະລິດສິນຄ້າ ແລະ ພົວພັນເສດຖະກິດ ກັບບັນດາແຂວງ ກໍ່ຄືໃນພາກພື້ນອາຊີ ແລະ ໃນໂລກ ໃຫ້ໄວຂື້ນເປັນກ້າວໆ

**ຕາຕະລາງສັງລວມທາງດ້ານຄົມມະນາຄົມ**

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ (ກິໂລແມັດ) | ໝາຍເຫດ |
|---|---|---|---|---|
| 1 | ເສັ້ນທາງຫຼວງແຫ່ງຊາດ | ເສັ້ນ | 451 | |
| 2 | ເສັ້ນທາງຫຼວງຂອງແຂວງ | ເສັ້ນ | 461 | |
| 3 | ເສັ້ນທາງຂອງເມືອງ | ເສັ້ນ | 408 | |
| 4 | ເສັ້ນທາງຊົນນະບົດ ແລະ ຊຸມຊົນ | ເສັ້ນ | 1.397 | |
| | ໃນຈຳນວນເສັ່ນທາງດັ່ງກ່າວມີ : | | | |
| 1 | ທາງປູເບຕົງ | ເສັ້ນ | 1,17 | |
| 2 | ທາງປູຢາງ | ເສັ້ນ | 254 | |
| 3 | ທາງປູຫີນ ແລະ ດິນທາງ | ເສັ້ນ | 823 | |
| 4 | ທາງດິນທຳມະຊາດ | ເສັ້ນ | 2.309 | |

## 2.5.2 ທາງດ້ານວັດທະນາທຳ - ສັງຄົມ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | ໝາຍເຫດ |
|---|---|---|---|---|
| 1 | ໂຮງຮຽນປະຖົມ | ແຫ່ງ | 604 | |
| 2 | ໂຮງຮຽນມັດທະຍົມຕອນປາຍ | ແຫ່ງ | 1 | ມ 4 - ມ 6 |
| 3 | ໂຮງຮຽນມັດທະຍົມສົມບູນ | ແຫ່ງ | 23 | ມ 1 - ມ 6 |
| 4 | ໂຮງຮຽນວິຊາຊີບ | ແຫ່ງ | 4 | ເອກະຊົນ |
| 5 | ໂຮງຮຽນອານຸບານ | ແຫ່ງ | 63 ແຫ່ງ | ເອກຊົນ 6 ແຫ່ງ |
| 6 | ໂຮງໝໍ | ແຫ່ງ | 9 | |
| 7 | ສຸກສາລາ | ແຫ່ງ | 79 | |
| 8 | ຫ້ອງຫວດພະຍາດ | ແຫ່ງ | 24 | ເອກະຊົນ |
| 9 | ໂຮງງານນ້ຳດື່ມ | ແຫ່ງ | 15 | |
| 10 | ວັດ ແລະ ໂບດ | ແຫ່ງ | 463 | ໂບດ 20 |

## 3. ວິເຄາະຄວາມອາດສາມາດ, ຜູ້ຖືກຜົນກະທົບໄດ້ງ່າຍ ແລະ ໄພອັນຕະລາຍ

### 3.1 ໄພນ້ຳຖ້ວມ

ຢູ່ພາຍໃນແຂວງຄຳມ່ວນສ່ວນໃຫ່ຍໄພນ້ຳຖ້ວມແມ່ນເກີດຈາກນ້ຳຂອງຍູ້, ນ້ຳເຊບັ້ງໄຟ, ເຊນ້ອຍ ແລະນ້ຳສາຍຕ່າງໆຂື້ນ (ໄຫຼບໍ່ທັນ) ພາໃຫ້ນ້ຳທະລັກເຂົ້າຖ້ວມພື້ນທີ່ທຳການຜະລິດຂອງປະຊາຊົນ ເຮັດໃຫ້ຜົນຜະລິດທາງດ້ານກະສິກຳເສຍຫາຍເປັນຈຳນວນຫຼວງຫຼາຍ ແລະ ອີກສ່ວນໜຶ່ງກໍ່ມາຈາກພະຍຸຝົນ

- **ຄວາມຮຸນແຮງ ແລະ ໄລຍະເກີດໄພນ້ຳຖ້ວມ**

ຍ້ອນສາຍເຫດດັ່ງກ່າວນີ້ເຮັດໃຫ້ຜົນຜະລິດທາງດ້ານກະສິກຳເສຍຫາຍປະມານ 80% ຂອງມູນເສຍຫາຍທັງໝົດ, ທາງດ້ານຄົມມະນາຄົມເສຍຫາຍ 15% ແລະ ວັດທະນາທຳ-ສັງຄົມ 5 % ນອກຈາກຜົນເສຍຫາຍດັ່ງກ່າວນັ້ນຍັງເກີດມີພະຍາດລະບາດ (ຄົນ ແລະ ສັດ) ຕາມອີກ ສ້າງຄວາມບໍ່ສະຫງົບໃນສັງຄົມ (ອຶດຫິວ) ປະຊາຊົນຕ້ອງຈາກດິນດອນຕອນຫຍ້າເຂົ້າມາຫາເຮັດວຽກຢູ່ໃນເມືອງ.

- ໄລຍະເກີດໄພນ້ຳຖ້ວມສ່ວນຫຼາຍແມ່ນແຕ່ທ້າຍເດືອນ ກໍລະກົດ - ເດືອນຕຸລາ

**ຕາລະຕາງລະດັບນ້ຳ ແລະ ປະລິມານນ້ຳຝົນ ສົກປີ : 2005**

| ເນື້ອໃນ | ລະດັບນ້ຳ | | ປະລິມານນ້ຳຝົນ | | ລະດັບອັນຕະລາຍ | ໝາຍເຫດ |
|---|---|---|---|---|---|---|
| | 2004 | 2005 | 2004 | 2005 | | |
| ນ້ຳຂອງ (ເມືອງທ່າແຂກ) | 13.26m | 13.96m | 2.346,3mm | 2.606,6 mm | 13,50 m | |
| ນ້ຳເຊ (ເຊບັ້ງໄຟ) | 20.10m | 20.68m | | | 17.00 m | |
| ນ້ຳເຊ ( ມະຫາໄຊ) | 15.13m | 16.60m | | | 15.00 m | |

### 3.2 ໄພແຫ້ງແລ້ງ

ຕໍ່ກັບບັນຫາໄພແຫ້ງແລ້ງສ່ວນໃຫ່ຍແມ່ນເກີດຈາກຝົນຂາດຊ່ວງ , ບໍ່ຕົກຕາມລະດູການ, ນ້ຳຫ້ວຍນຳເຊບົກແຫ້ງ ເຮັດໃຫ້ຜົນຜະລິດທາງດ້ານກະສິກຳຂອງປະຊາຊົນແຫ້ງຕາຍ ນອກຈາກສິ່ງຜົນເສຍຫາຍຕໍ່ພືດແລ້ວ ຍັງສົ່ງຜົນສະທ້ອນຕໍ່ສັດລ້ຽງຂອງປະຊາຊົນຂາດຫຍ້າ ແລະ ນ້ຳກິນ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນພົບຄວາມຫຍຸ້ງຍາກ

- ໄລຍະເກີດແມ່ນຊ່ວງທ້າຍເດືອນພຶດສະພາ ຫາ ທ້າຍເດືອນກໍລະກົດ (ແຕ່ຈະແລ້ງເປັນບາງປີ)

### 3.3 ການກະທົບກະເທືອນງ່າຍຂອງເສດຖະກິດ - ສັງຄົມ

ແຂວງຄຳມ່ວນ ສ່ວນໃຫ່ຍທີ່ປະຊາຊົນໄດ້ຮັບຜົນກະທົບຈາກໄພພິບັດ (ໄພທຳມະຊາດ) ແມ່ນ :

1. ໄພນ້ຳຖ້ວມ 2. ໄພແຫ້ງແລ້ງ 3. ອັກຄີໄພ (ໄພໃໝ້ເຮືອນ) - ລົມພະຍຸພັດ

### ຕາຕະລາງເມືອງ , ບ້ານ ທີ່ມີຄວາມສ່ຽງໄດ້ຮັບຜົນກະທົບງ່າຍ

| ຊື່ເມືອງ | ເນື້ອທີ່ ກລມ2 | ບ້ານ | ພົນລະເມືອງ | | ແມ່ນນ້ຳ |
|---|---|---|---|---|---|
| | | | ລວມ | ຍິງ | |
| ເມືອງທ່າແຂກ | 918 | 141 | 83.957 | 42.965 | ນ້ຳຂອງ ນ້ຳໂດນ |
| ເມືອງມະຫາໄຊ | 1.409 | 89 | 30.919 | 15.721 | ນ້ຳເຊບັ້ງໄຟ |
| ເມືອງໜອງບົກ | 321 | 72 | 41.243 | 20.920 | ນ້ຳຂອງ,ນ້ຳເຊບັ້ງໄຟ |
| ເມືອງຫີນບູນ | 3.011 | 166 | 62.030 | 31.121 | ນ້ຳຂອງ,ນ້ຳຫີນບູນ |
| ເມືອງຍົມມະລາດ | 1.438 | 74 | 27.699 | 14.348 | ນ້ຳຍົມ |
| ເມືອງໄຊບົວທອງ | 913 | 65 | 20.704 | 10.466 | ນ້ຳເຊນ້ອຍ |

## 3.4 ໂຄງຮ່າງພື້ນຖານຖືກເສຍຫາຍ

ຢູ່ພາຍແຂວງຄຳມ່ວນ ຖ້າເວົ້າເຖິງປະເພດທາງ,ຂົວ ແມ່ນຍັງມີຫຼາຍແຫ່ງທີ່ຍັງບໍ່ໄດ້ມາດຕະຖານ ເປັນຕົ້ນແມ່ນປະເພດທາງດິນແດງ, ປະເພດດິນທຳມະຊາດ , ຂົວກໍ່ປະເພດຂົວໄມ້ (ຂົວຊຸມຊົນ) ເຊິ່ງພໍຮອດລະດູນ້ຳຖ້ວມ ຈຳນວນດັ່ງກ່າວນີ້ແມ່ນມີຄວາມສ່ຽງສູງທີ່ຈະຖືກຜົນກະທົບໄດ້ງ່າຍ ເພາະນ້ຳຈະເຈາະເຈື່ອນ, ມ້າງເພ, ເຮັດປະຊາຊົນພົບຄວາມຫຍຸ້ງຍາກໃນການໄປມາ ຖືກຕັດຂາດຈາກໂລກພາຍນອກ ນອກຈາກຖືກຜົນກະທົບທາງດ້ານເສັ້ນທາງຄົມມະນະຄົມແລ້ວຍັງມີໂຮງຮຽນ, ໂຮງໝໍ ໄດ້ຮັບຜົນກະທົບເສຍຫາຍຈາກໄພນ້ຳຖ້ວມ.

### ຕາຕະລາງຜົນເສຍຫາຍທາງດ້ານກະສິກຳ ສົກປີ 2005

| ລ/ດ | ລາຍການ | ທ່າແຂກ | ມະຫາໄຊ | ໜອງບົກ | ຫີນບູນ | ຍົມະລາດ | ບົວລະພາ | ນາກາຍ | ເຊບັ້ງໄຟ | ໄຊບົວທອງ |
|---|---|---|---|---|---|---|---|---|---|---|
| 1 | ຈຳນວນພີຖືກກະທົບ | | | | | | | | | |
| | - ຈຳນວນບ້ານ | 90 | 70 | 71 | 126 | 36 | 28 | 27 | 44 | 25 |
| | - ຈຳນວນຄອບຄົວ | 2.762 | 2.590 | 4.841 | 8.806 | 1.919 | 1.894 | 839 | 2.119 | 449 |
| | - ຈຳນວນ ຄົນ | 13.948 | 14.159 | 27.961 | 48.759 | 10.919 | 10.342 | 4.195 | 10.880 | 2.934 |
| 2 | ນາປີ | | | | | | | | | |
| | - ເນື້ອທີ່ປັກດຳ , ຮຕ | 9.530 | 6.520 | 10.008 | 7.920 | 4.560 | 3.500 | 1.443 | 5.580 | 4.300 |
| | - ເນື້ອທີ່ນ້ຳຖ້ວມ, ຮຕ | 2.073 | 3.830 | 7.510 | 7.096 | 1.760 | 2.262 | 114 | 3.200 | 449 |
| | - ເນື້ອທີ່ເສຍຫາຍ,ຮຕ | 829 | 3.568 | 6.574 | 6.336 | 1.397 | 1.190 | 77 | 2.726 | 294 |
| | - ມູນຄ່າ ລ້ານ ກີບ | 3.581,28 | 9.419,52 | 26.033,04 | 28.131,84 | 5.196,84 | 3.784,20 | 295,68 | 11.776,32 | 1.231,28 |
| 3 | ພືດສຳຮອງ | | | | | | | | | |
| | - ເນື້ອທີ່ປູກ , ຮຕ | 420 | 354 | 648 | 350 | 202 | 252 | 123 | 503 | 142 |
| | - ເນື້ອທີ່ເສຍຫາຍ,ຮຕ | 126 | 354 | 250 | | 91 | 75 | | 137 | |
| | - ມູນຄ່າ ລ້ານ ກີບ | 504,00 | 1.416,00 | 1.000,00 | | 364,00 | 300,00 | | 548,00 | |
| 4 | ໜອງປາ | | | | | | | | | |

| ລ/ດ | ລາຍການ | ທ່າແຂກ | ມະຫາໄຊ | ໜອງບົກ | ຫີນບູນ | ຍົມມະລາດ | ບົວລະພາ | ນາກາຍ | ເຊບັ້ງໄຟ | ໄຊບົວທອງ |
|---|---|---|---|---|---|---|---|---|---|---|
| | - ໜອງປາ,ໜອງ | 548 | 3 | 658 | 104 | 39 | | | 167 | 10 |
| | - ມູນຄ່າ ລ້ານ ກີບ | 14,00 | 3,00 | 658,00 | 780,00 | 45,00 | | | 18,19 | 10,00 |
| 5 | ສັດລ້ຽງ | | | | | | | | | |
| 5.1 | - ຄວາຍ , ໂຕ | 17 | 55 | 5 | 20 | 3 | 17 | 2 | 12 | |
| | - ມູນຄ່າ ລ້ານ ກີບ | 42,50 | 135,00 | 12,50 | 50,00 | 6,00 | 68,00 | 5,00 | 24,00 | |
| 5.2 | - ງົວ , ໂຕ | 6 | 100 | 9 | 19 | 7 | 9 | | 91 | 1 |
| | - ມູນຄ່າ ລ້ານ ກີບ | 6,00 | 250,00 | 10,80 | 19,00 | 10,50 | 13,00 | | 136,50 | 1,50 |
| 5.3 | - ໝູ , ໂຕ | | 300 | 30 | 100 | 59 | 6 | | 210 | 8 |
| | - ມູນຄ່າ ລ້ານ ກີບ | | 105,00 | 15,00 | 40,00 | 17,50 | 1,50 | | 157,50 | 3,20 |
| 5.4 | - ສັດປີກ , ໂຕ | 861 | 6.996 | 100 | 2.094 | 636 | 138 | | 4.010 | 30 |
| | - ມູນຄ່າ ລ້ານ ກີບ | 8,61 | 139,92 | 1,50 | 31,41 | 6,36 | 2,76 | | 60,15 | 0,60 |
| 6 | ຊົລະປະທາ | | | | | | | | | |
| 6.1 | - ລະບົບຈັກສູບນ້ຳ | 6 | | | | 2 | | | 14 | |
| | - ມູນຄ່າ ລ້ານ ກີບ | 26,60 | | | | 10,00 | | | 371,00 | |
| 6.2 | - ທິວງາ | 10 | 5 | 3 | 4 | 1 | | | 14 | |
| | - ມູນຄ່າ ລ້ານ ກີບ | 67,60 | 26,30 | 115,00 | 1.136,00 | 3,00 | | | 45,80 | |
| 6.3 | - ຄອງເໝືອງ | | 4 | 13 | 6 | 2 | | | 3 | |
| | - ມູນຄ່າ ລ້ານ ກີບ | | 1.605,00 | 639,58 | 413,00 | 10,00 | | | 620,00 | |
| 6.4 | - ປະຕູນ້ຳ | | | 2 | | | | | 5 | |
| | - ມູນຄ່າ ລ້ານ ກີບ | | | 639,58 | | | | | 16,00 | |
| 6.5 | - ຝາຍດິ | | | | 2 | | 2 | 7 | 6 | |
| | - ມູນຄ່າ ລ້ານ ກີບ | | | | 200,00 | | 5,00 | 13,78 | 120,00 | |
| 6.6 | - ຝາຍກວຍທີ | | | | | | 5 | | | |
| | - ມູນຄ່າ ລ້າ ກີບ | | | | | | 50,00 | | | |
| 6.7 | - ຄູປ້ອງກັ້ນ້ຳຖ້ວມ | | | | 1 | | | | | |
| | - ມູນຄ່າ ລ້ານ ກີບ | | | | 115,83 | | | | | |

## ຕາຕະລາງຜົນເສຍຫາຍທາງດ້ານ ການສຶກສາ ສົກປີ : 2005

ສຳລັບວຽກທາງດ້ານ ສຶກສາ ສາມາດເກັບກຳຜົນເສຍຫາຍໄດ້ທັງໝົດ 306,10 ລ້ານ ກີບ.

| ລ/ດ | ລາຍການ | ທ່າແຂກ | ມະຫາໄຊ | ໜອງບົກ | ຫີນບູນ | ຍົມມະ ລາດ | ບົວລະພາ | ນາກາຍ | ເຊບັ້ງໄຟ | ໄຊບົວທອງ | **ລວມ** |
|---|---|---|---|---|---|---|---|---|---|---|---|
| 1 | ຈຳນວນໂຮງຮຽນ | 2 | 32 | 21 | 18 | | 1 | | 13 | | |
| 2 | ສັງກະສີເສຍຫາຍ | | 450 | 150 | 100 | | 250 | | 485 | | **1.435** |
| | *ມູນຄ່າ , ລ້ານກີບ* | | 17,10 | 5,70 | 3,80 | | 9,50 | | 18,43 | | **54,60** |
| 3 | ໄມ້ແປ້ນເສຍຫາຍ | | | | 90 | | | | 14 | | **104** |
| | *ມູນຄ່າ , ລ້ານກີບ* | | | | 2,25 | | | | 45,80 | | **48,05** |

| ລ/ດ | ລາຍການ | ທ່າແຂກ | ມະຫາໄຊ | ໜອງບົກ | ຫີນບູນ | ຍົມມະລາດ | ບົວລະພາ | ນາກາຍ | ເຊບັ້ງໄຟ | ໄຊບົວທອງ | **ລວມ** |
|---|---|---|---|---|---|---|---|---|---|---|---|
| 4 | ໂຕະ,ຕັ່ງ ເສຍຫາຍ | 9 | 244 | 218 | 310 | | | | 3 | | **784** |
| | *ມູນຄ່າ , ລ້ານກີບ* | 0,90 | 12,20 | 10,90 | 15,50 | | | | 0,45 | | **39,95** |
| 5 | ກະດານດຳ | 5 | 58 | 50 | 51 | | | | 5 | | **169** |
| | *ມູນຄ່າ , ລ້ານກີບ* | 0,75 | 8,70 | 7,50 | 7,65 | | | | 16,00 | | **40,60** |
| 6 | ປື້ມແບບຮຽນ | 20 | | | 130 | | | | 6 | | **156** |
| | *ມູນຄ່າ , ລ້ານກີບ* | 0,40 | | | 1,30 | | | | 120,00 | | **121,70** |
| 7 | ພື້ຊີມັງ | 0,30 | | 1 | | | | | | | **1** |
| | *ມູນຄ່າ , ລ້ານກີບ* | 0,30 | | 0,83 | | | | | | | **1,13** |

## ຕາຕະລາງຜົນເສຍຫາຍ ທາງດ້ານສາທາລະນະສຸກ ສົກປີ 2005 :

ສຳລັບວຽກທາງດ້ານ ສາທາສາມາດເກັບກຳຜົນເສຍຫາຍໄດ້ທັງໝົດເປັນຕົ້ນວຽກ ສຸກສາລາ, ວຽກ ຕູ້ຢາ ແລະ ນ້ຳສ້າງບາດານ ເປັນມູນຄ່າທັງໝົດ 940 ລ້ານ ກີບ ແລະ ພ້ອມນີ້ຍັງໄດ້ເກັບກຳສະພາບການລະບາດຂອງພະຍາດທີ່ເກີດຂື້ນໃນຊ່ວງນ້ຳຖ້ວມ ເຊິ່ງບໍ່ສາມາດຄິດໄລ່ເປັນມູນຄ່າການເສຍ ຫາຍ

| ລ/ດ | ລາຍການ | ທ່າແຂກ | ມະຫາໄຊ | ໜອງບົກ | ຫີນບູນ | ຍົມມະລາດ | ບົວລະພາ | ນາກາຍ | ເຊບັ້ງໄຟ | ໄຊບົວທອງ | **ລວມ** |
|---|---|---|---|---|---|---|---|---|---|---|---|
| 1 | ສຸກສາລາ, ແຫ່ງ | | | 5 | | | | | | | **5** |
| | *ມູນຄ່າ , ລ້ານກີບ* | | | 23,00 | | | | | | | **23,00** |
| 2 | ຕູ້ຢາ , ແຫ່ງ | | 23 | | | | | | | | **23** |
| | *ມູນຄ່າ , ລ້ານກີບ* | | 4,00 | | | | | | | | **4,00** |
| 3 | ນ້ຳສ້າງບາດາ | | | 913 | | | | | | | **913** |
| | *ມູນຄ່າ , ລ້ານກີບ* | | | 913,00 | | | | | | | **913,00** |
| 4 | ກາເປັພະຍາດ | | | | | | | | | | **0** |
| | - ໄຂ້ຫວັດ , ຄົ | 1.141 | 7 | | 75 | 129 | | | 569 | | **1.921** |
| | - ຖອກທ້ອງ , ຄົ | 75 | 3 | 10 | 30 | 26 | | | 117 | | **261** |
| | - ຕຸ່ມເປື່ອຍ , ຄົ | 11 | 135 | 10 | | | | | 1.085 | | **1.241** |
| | - ຕີຄັ , ຄົ | 2.053 | 100 | | 3 | 8 | | | 2.142 | | **4.306** |
| | - ໄຂ້ເລືອດອອກ,ຄົ | 215 | | 21 | 1 | | | | 2 | | **239** |
| | - ອັກເສບປອດ | | 2 | | 46 | | | | 78 | | **126** |
| | - ຕາແດງ | 11 | | | 34 | | | | | | **45** |
| | - ໄຂ້ຍຸງ | 11 | 3 | | | 22 | | | 69 | | **105** |
| | - ໄຂ້ທໍລະພິດ | 65 | | | | | | | 2 | | **67** |
| | - ໄຂ້ຍ່ງວໝູ | 75 | | | | | | | 1 | | **76** |
| | - ໄຂ້ອື່ໆ | 97 | 6 | | | 19 | | | 118 | | **240** |

**ຕາຕະລາງຜົນເສຍຫາຍທາງດ້ານ ຄົມມະນາຄົມ ສົກປີ : 2005**

| ລ/ດ | ລາຍການ | ຂົວ | | ທໍ່ | | ທາງ | |
|---|---|---|---|---|---|---|---|
| | | ແຫ່ງ | ລ້ານກີບ | ມ ຍ | ລ້ານກີບ | ກມ | ລ້ານກີບ |
| 1 | ທ່າແຂກ | 2 | 444,00 | 96 | 68,52 | 5,40 | 317,67 |
| 2 | ມະຫາໄຊ | | 153,20 | | | 9,80 | 174,19 |
| 3 | ໜອງບົກ | 2 | 99,31 | | | 6,19 | 485,00 |
| 4 | ຫີນບູນ | | | | | 15,46 | 695,66 |
| 5 | ຍົມມະລາດ | 2 | 300,71 | 41 | 100,00 | 13,35 | 715,11 |
| 6 | ບົວລະພາ | | | | | | 2.348,85 |
| 7 | ນາກາຍ | | | | | | 50,39 |
| 8 | ເຊບັ້ງໄຟ | | | | | 49,79 | 760,94 |
| 9 | ໃຊບົວທອງ | | | | | | 499,51 |
| | ລວມ | 6 | 997,22 | 137 | 168,52 | 99,99 | 6.047,32 |

## 3.5 ຄວາມອາດສາມາດ ແລະ ແຫຼ່ງວັດຖຸ

### 3.5.1 ບັນຊີອຸປະກອນ, ພາຫະນະ, ເຄື່ອງສື່ສານ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | | ໝາຍເຫດ |
|---|---|---|---|---|---|
| | | | ມີແລ້ວ | ຕ້ອງການ | |
| 1 | ເຕັນ | ຊຸດ | 00 | 100 | |
| 2 | ເຮືອໄມ້ | ລຳ | 5.650 | 00 | ປະຊາຊົນ |
| 3 | ເຮືອທ້ອງແບນ | ລຳ | 00 | 150 | |
| 4 | ລົດເມ | ຄັນ | 86 | 00 | ເອກະຊົນ |
| 5 | ລົດໂດຍສານ (ສອງແຖວ) | ຄັນ | 75 | 00 | ເອກະຊົນ |
| 6 | ໂທລະສັບຕັ້ງໂຕະ | ໜ່ວຍ | 01 | 02 | |
| 7 | ວິທະຍຸຕິດຕໍ່ໄລຍະໄກ | ໜ່ວຍ | 00 | 5 | |
| 8 | ເຄື່ອງຊູຊີບ | ຊຸດ | 00 | 65 | |
| 9 | ໂທລະໂຄ້ງ | ໜ່ວຍ | 00 | 50 | |

### 3.5.2 ອຸປະກອນຄອບຄຸ້ມນ້ຳຖ້ວມ ແລະ ສິ່ງອຳນວຍຄວາມສະດວກທາງດ້ານການແພດ.

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | | ໝາຍເຫດ |
|---|---|---|---|---|---|
| | | | ມີແລ້ວ | ຕ້ອງການ | |
| 1 | ຈັກສູບນ້ຳ | ໜ່ວຍ | 00 | 18 | |
| 2 | ຖົງຂີ້ຊາຍ | ເປົາ | 00 | 800.000 | |
| 3 | ໂຮງໝໍ | ແຫ່ງ | 09 | 01 | |
| 4 | ຊ່ຽວຊານ ແລະ ທ່ານໝໍ | ຄົນ | 450 | 00 | |
| 5 | ລົດໂຮງໝໍ | ຄັນ | 02 | 07 | |
| 6 | ທີມງານຄົ້ນຫາ ແລະ ກູ້ໄພ | ທີມ | 00 | 09 | |
| 7 | ທີມຕໍ່ສູ້ກັບໄພນ້ຳຖ້ວມ | ທີມ | 00 | 09 | |
| 8 | ອາສາສະມັກ | ຄົນ | 00 | 100 | |

## 4. ກິງຈັກການຈັດຕັ້ງສຳລັບວຽກງານຄຸ້ມຄອງໄພພິບັດຂັ້ນແຂວງຄຳມ່ວນ

### 4.1 ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ (PDMC)

1. ທ່ານ ໂອໃດ ສຸດາພອນ ຮອງເຈົ້າແຂວງ ໆ ຄຳມ່ວນ ເປັນປະທານ.
2. ທ່ານ ແສງທອງ ພະຄຸນທອງ ຫົວໜ້າພະແນກ ຮສສ ແຂວງ ຮອງປະທານ
3. ທ່ານ ສີພອນ ຊາລີບູນ ປະທານແນວລາວສ້າງຊາດ ແຂວງ ເປັນກຳມະການ
4. ທ່ານ ອິນປອນ ແສງມະນີ ຫົວໜ້າພະແນກ ຖະແຫຼງຂ່າວ ແລະ ວັດທະນາທຳແຂວງ ເປັນກຳມະການ
5. ທ່ານ ຄຳເຟືອງ ເທບພະກັນ ຮອງຫົວໜ້າພະແນກ ກະສິກຳ - ປ່າໄມ້ ແຂວງ ເປັນກຳມະການ
6. ທ່ານ ຄຳພົງ ວົງສຸລາດ ຮອງຫົວໜ້າພະແນກ ສຶກສາ ແຂວງ ເປັນກຳມະການ
7. ທ່ານ ດຣ ເກດສະໜາ ລັດຖະຈັກ ຮອງຫົວໜ້າພະແນກ ສາທາລະນະສຸກແຂວງ ເປັນກຳມະການ
8. ທ່ານ ບຸນໄມ ຈັນທະວົງໄຊ ຮອງຫົວໜ້າກອງບັນຊາການ ປ ກ ສ ແຂວງ ເປັນກຳມະການ
9. ທ່ານ ມູ ວົງພູທອນ ຮອງຫົວໜ້າພະແນກຄົມມະນາຄົມ ໄປສະນີແລະກໍ່ສ້າງແຂວງ ເປັນກຳມະການ
10. ທ່ານ ຄຳຫຼ້າ ພົມວິໄລ ຮອງຫົວໜ້າພະແນກ ແຜນການ - ການລົງທຶນແຂວງ ເປັນກຳມະການ
11. ທ່ານ ນາງ ວຽງມະນີ ຈັນທະນະສິນ ຮອງປະທານສະຫະພັນແມ່ຍິງ ແຂວງ ເປັນກຳມະການ
12. ທ່ານ ບຸນເລັ່ງ ກຸນອາວົງ ຮອງຫົວໜ້າພະແນກການເງິນແຂວງ ເປັນກຳມະການ
13. ທ່ານ ຄຳຮຸ່ງ ແກ້ວບຸນມີ ຮອງ ເລຂາຊາວໜຸ່ມແຂວງ ເປັນກຳມະການ
14. ທ່ານ ບຸນໂຮມ ມຸກດາສັກ ຮອງຫົວໜ້າພະແນກອຸດສະຫະກຳ ແລະການຄ້າແຂວງ ເປັນກຳມະການ
15. ທ່ານ ບຸດດີ ບຸນທະວົງ ຮອງຫົວໜ້າພະແນກ ພະລັງງານ ແລະ ບໍ່ແຮ່ ເປັນກຳມະການ
16. ທ່ານ ນາງ ສາທິດ ຈັນສີ ຮອງຫົວໜ້າຫ້ອງວ່າການແຂວງ ເປັນກຳມະການ

17. ທ່ານ ດາລາວົງ ວົງສະຫວັນທອງ ຫົວໜ້າຫ້ອງການ ກາແດງປະຈຳແຂວງ ເປັນກຳມະການ
18. ທ່ານ ສົມແຄນຫົວໜ້າ ຫ້ອງການພາລາທິການທະຫານແຂວງ ເປັນກຳມະການ

- **ກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ**

1. ທ່ານ ບຸນຖາວອນ ສີສຸພັນທອງ ຜູ້ປະສານງານ ພະແນກ ຮ ສ ສ ແຂວງ ເປັນຫົວໜ້າ
2. ທ່ານ ສົມຫວັງ ສຸວັນທອງ ວິຊາການຫ້ອງການຊາວໜຸ່ມແຂວງ ເປັນຮອງ
3. ທ່ານ ພັນຕີ ຄຳພອນ ສີກຸມພົນ ຮອງປ້ອງກັນຄວາມສະຫງົບ ເປັນກຳມະການ
4. ທ່ານ ບຸນມີ ສີບຸນເຮືອງ ວິຊາການພະແນກກະສິກຳ - ປ່າໄມ້ ເປັນກຳມະການ
5. ທ່ານ ນາງ ອຸໄລວັນ ແສງສຸວັນນຸຣັກ ວິຊາການຈັດຕັ້ງ ພະແນກ ສຶກສາປະຈຳແຂວງ ເປັນກຳມະການ
6. ທ່ານ ນາງ ຈອມຈັນ ເພັດພູທອນ ການເງິນພະແນກ ຮ ສ ສ ແຂວງ ເປັນກຳມະການ

**ພາລະບາດ ແລະ ໜ້າທີ່ຮັບຜິດຊອບຂອງ PDMC (ກ່ອນ ລະຫວ່າງ ແລະ ຫຼັງນ້ຳຖ້ວມ)**

| ກ່ອນໄພພິບັດ | ໄລຍະເກີດ | ຫຼັງເກີດໄພພິບັດ |
|---|---|---|
| - ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ໄດ້ເປີດກອງປະຊຸມປຶກສາຫາລືເພື່ອວາງແຜນກ່ອນເກີດໄພພິບັດ<br>- ຂື້ນແຜນຫ້າງຫາກະກຽມແນວພັນເຂົ້າ ອາຫານແຫ້ງເພື່ອຊ່ວຍເຫຼືອສຸກເສີນ<br>- ມອບໝາຍຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນ, ຂະແໜງການຕ່າງໆທີ່ກ່ຽວຂ້ອງ ເພື່ອຕິດຕາມສະພາບແຕ່ລະໄລຍະ | - ຄະນະກຳມະການໄດ້ແຕ່ງຕັ້ງພະນັກງານວິຊາການລົງເກັບກຳຂໍ້ມູນເບື້ອງຕົ້ນເພື່ອລາຍງານການນຳ<br>- ລົງຕິດຕາມ,ກວດກາປະເມີນຜົນຕົວຈິງຢູ່ທ້ອງຖິ່ນທີ່ເກີດໄພພິບັດ<br>- ປຸກລະດົມຂົນຂວາຍອົງການຈັດຕັ້ງຕ່າງໆທັງພາກລັດ ແລະ ເອກະຊົນເພື່ອຊ່ວຍເຫຼືອຜູ້ປະສົບໄພ | - ເປີດກອງປະຊຸມຄົບຄະນະເພື່ອປະເມີນຜົນເສຍຫາຍທາງດ້ານຕ່າງໆຫຼັງນ້ຳລົງ<br>- ສັງລວມຂໍ້ມູນ, ຂື້ນແຜນນຳສະເໜີຕໍ່ຂັ້ນເທິງ ເພື່ອຂໍເຄື່ອງຊ່ວຍເຫຼືອແນວພັນພືດ, ເຂົ້າ, ອາຫານ ແລະ ເຄື່ອງໃຊ້ສ່ອຍຕ່າງໆ ເພື່ອຟື້ນຟູ<br>- ລົງຢ້ຽມບ້ານທີ່ຖືກຜົນກະທົບເພື່ອໃຫ້ກຳລັງໃຈເຂົາເຈົ້າດີຂື້ນ<br>- ລະດົມທຶນຮອນຈາກພາກສ່ວນຕ່າງໆ ເພື່ອຈັດຊື້ວັດຖຸ, ອຸປະກອນຕ່າງໆ ເພື່ອສ້ອມແປງສິ່ງທີ່ເປ້ເພໃຫ້ກັບຄືນສູ່ສະພາບເດີມ |

**ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງກອງເລຂາ (ກ່ອນ ລະຫວ່າງ ຫຼັງນ້ຳຖ້ວມ)**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ເປັນເສນາທິການໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ<br>- ສັງລວມຂໍ້ມູນ<br>- ກະກຽມເອກະສານ ເພື່ອເປີດກອງປະຊຸມ<br>- ປະສານງານກັບພາກສ່ວນຕ່າງໆທັງພາກລັດ ແລະ ເອກະຊົນແທນຄະນະ | - ລົງຕິດຕາມເກັບກຳຂໍ້ມູນຜົນເສຍຫາຍເບື້ອງຕົ້ນໄລຍະເກີດໄພພິບັດ<br>- ສັງລວມຂໍ້ມູນຜົນເສຍຫາຍທາງດ້ານຕ່າງໆໃຫ້ຄະນະຮັບຊາບເປັນໄລຍະ | - ສົມທົບກັບຄະນະຂັ້ນເມືອງລົງເກັບກຳຂໍ້ມູນຜົນເສຍຫາຍຕົວຈິງ<br>- ກະກຽມຂໍ້ມູນເພື່ອເປີດກອງປະຊຸມຄົບຄະນະ ໃນການວາງແຜນການຟື້ນຟູຫຼັງໄພນ້ຳຖ້ວມ |

## 4.2 ທີມງານຄຸ້ມຄອງໄພພິບັດ ແລະ ໜ້າທີ່ຮັບຜິດຊອບຂອງແຕ່ລະຂະແໜງ

### 4.2.1. ພະແນກກະສິກຳແລະປ່າໄມ້ແຂວງຄຳມ່ວນ

| | | |
|---|---|---|
| - ມີຄະນະກຳມະການຄຸ້ມຄອງໄພພິບັດເຊິ່ງມີຫຼາຍພາກສ່ວນກ່ຽວຂ້ອງ<br>- ມີກອງປະຊຸມດັ່ງກ່າວທັງຂັ້ນແຂວງແລະເມືອງ<br>- ແບ່ງພາລະບົດບາດຂອງແຕ່ລະພາກສ່ວນແຕ່ລະຂັ້ນ<br>- ສະເພາະກະສິກຳມີບົດບາດ:<br>. ກະກຽມແນວພັນເຂົ້າພືດ,ຝຸ່ນ<br>. ກະກຽມແນວພັນສັດ,ຢາ,ເຄື່ອງແພດ<br>. ເກັບກຳຂໍ້ມູນອຸຕຸ,ລາຍງານແຈ້ງຂ່າວ | - ລົງທ້ອງຖິ່ນ,ເມືອງ,ບ້ານຕົວຈິງເພື່ອແນະນຳການປູກຝັງ.<br>- ລົງຕິດຕາມທ້ອງຖິ່ນ, ເມືອງ, ບ້ານທີ່ຖືກໄພພິບັດ.<br>- ແຈ້ງຂ່າວພະຍາກອນເຕືອນໄພແຕ່ຫົວທີ | - ສືບຕໍ່ລ້ຽງ,ປູກ(ສັດ,ພືດ,ເຂົ້າທີ່ເໝາະສົມຫຼັງນ້ຳຖ້ວມ.<br>- ຕີລາຄາ,ປະເມີນຜົນການຈັດ ຕັ້ງ ປະຕິບັດ |

**4.2.2. ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ເປັນຜູ້ປະສານງານກັບພາກສ່ວນຂະແໜງການຕ່າງໆເພື່ອສ້າງໂຄງຮ່າງການຈັດຕັ້ງ PDMC<br>-ຂຶ້ນແຜນຊອກຫາບຸກຄະລະກອນ<br>- ສ້າງແຜນໂຄງການປະຈຳປີເພື່ອຂໍງົບປະມານຮັບໃຊ້ໃນການຕອບໂຕ້ໄພພິບັດ.<br>- ເກັບກຳສັງລວມຂໍ້ມູນໄພພິບັດສົ່ງໃຫ້ ຄະນະກຳມະການ ຄພຂ.<br>-ພົວພັນກັບພາກສ່ວນການຈັດຕັ້ງເພື່ອປຸກລະດົມຊອກແຫຼ່ງລາຍຮັບ | - ແຈ້ງການໃຫ້ຄະນະຈັດຕັ້ງ<br>- ລົງເກັບກຳຂໍ້ມູນໄພພິບັດ<br>- ປຸກລະດົມຂົນຂວາຍອົງການຕ່າງໆ ເພື່ອຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ<br>- ສົ່ງເຄາະອຸປະກອນຮັບໃຊ້ປະຈຳວັນເພື່ອຊ່ວຍເຫຼືອຜູ້ປະສົບໄພສຸກເສີນ.<br>- ລາຍງານສະພາບໄພພິບັດແຕ່ລະໄລຍະໃຫ້ຄະນະປະທານ. | - ປະເມີນຜົນເສຍຫາຍລາຍງານໃຫ້ຄະນະນຳ<br>- ຂຶ້ນແຜນນຳສະເໜີເຄື່ອງຊ່ວຍເຫຼືອບັນເທົາທຸກ.<br>-ແຈກຢາຍເຄື່ອງບັນເທົາທຸກໃຫ້ປະຊາຊົນຜູ້ປະສົບເຄາະຮ້າຍ. |

**4.2.3. ພະແນກການເງິນແຂວງ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ກຽມງົບປະມານເພື່ອຮັບມືກັບເຫດການທີ່ຄາດຈະເກີດຂຶ້ນ. | - ອຳນວຍຄວາມສະດວກໃຫ້ແຕ່ລະຂະແໜງການໃຫ້ທັນກັບສະພາບການ | - ເໜີນຳຂັ້ນນຳເມື່ອມີໄພພິບັດ<br>- ປຸກລະດົມທັງພາກລັດ ແລະເອກະຊົນເພື່ອລະດົມທຶນຟື້ນຟູຄືນໃໝ່ |

**4.2.4. ກາແດງແຂວງ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ປະຊຸມວາງແຜນ<br>- ເຝິກອົບຮົມ ອສບ<br>- ຂົນຂວາຍຊອກທຶນ<br>- ອາຫານ<br>- ອຸປະກອນຮັບໃຊ້ທີ່ຈຳເປັນ<br>- ຕິດຕາມ ແລະແຈ້ງຂ່າວແກ່ຊຸມຊົນທີ່ມີຄວາມສ່ຽງ | - ເຮັດການຕອບໂຕ້ທັນທີດ້ານ<br>- ເຄື່ອນຍ້າຍສັດໄປບ່ອນປອດໄພ<br>- ຕັ້ງສູນຮອງຮັບ<br>- ແຈກຢາຍເຄື່ອງຮັບໃຊ້,ອາຫານ<br>- ປະຖົມພະຍາບານເບື້ອງຕົ້ນ<br>- ຕິດຕາມການເຄື່ອນໄຫວຂອງຜູ້ອົບພະຍົບ<br>- ໃຫ້ຄວາມຮູ້ດ້ານສຸຂະສຶກສາ<br>- ຕິດຕາມຂໍ້ມູນລາຍງານເປັນໄລຍະ | - ໃຫ້ຄວາມຮູ້ດ້ານສຸຂະສຶກສາ<br>- ຊອກແຫຼ່ງທຶນຊ່ວຍເຫຼືອ<br>- ລາຍງານ ແລະ ເກັບກຳຂໍ້ມູນ |

### 4.2.5. ພະແນກຖະແຫຼງຂ່າວ ແລະ ວັດທະນາທຳ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ຫາຂໍ້ມູນຈາກຂະແໜງການກ່ຽວຂ້ອງເພື່ອແຈ້ງຂ່າວເຕືອນໄພໃຫ້ປະຊາຊົນສາມາດກະກຽມຕອບໂຕແຕ່ຫົວທີເພື່ອຮັກສາຊີວິດ,ສັບສິນແລະຄວາມຢູ່ລອດຂອງປະຊາຊົນໃຫ້ປອດໄພ | - ລົງຕິດຕາມເຖິງເຂດເປົ້າໝາຍ ເພື່ອລະດົມ ແລະແຈ້ງຂ່າວແກ່ຊຸມຊົນ<br>- ລາຍງານສະພາບໄພພິບັດໃຫ້ ຄະນະນຳ ແລະ ພາຍນອກເພື່ອຫາເຄື່ອງຊ່ວຍເຫຼືອ | - ໂຄສະນາຟື້ນຟູບູລະນະພາຍຫຼັງ ໄພພິບັດ |

### 4.2.6. ສຶກສາແຂວງ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ກະກຽມແບ່ງວຽກໃຫ້ແຕ່ລະພາກສ່ວນເພື່ອກຽມຮັບມືກັບໄພພິບັດແລະພ້ອມທັງຈັດຕັ້ງປະຕິບັດ | - ລະດົມກຳລັງທຸກພາກສ່ວນເພື່ອຊ່ວຍປະຊາຊົນຜູ້ຖືກໄພພິບັດ | - ປະເມີນຜົນເສຍຫາຍທາງດ້ານ ວັດຖຸ ແລະ ສັບສິນ.<br>- ປະເມີນມູນຄ່າເສຍຫາຍ |

### 4.2.7. ພະແນກອຸດສະຫະກຳ ແລະ ການຄ້າ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ກະກຽມ,ຂຶ້ນແຜນຮັບມືຕໍ່ໄພພິບັດຈະເກີດຂື້ນ.<br>- ກວດກາມາດຖານມົນລະພິດຕ່າງໆຕາມໂຮງຈັກໂຮງງານ<br>- ເກັບກຳສະພາບສິນຄ້າເພື່ອປ້ອງກັນບໍ່ໃຫ້ກະທົບຕໍ່ປະຊາຊົນ | -ຈັດຕັ້ງຄະນະຄຸ້ມຄອງສິນຄ້າເພື່ອປ້ອງກັນຜົນສວຍໂອກາດ<br>- ຮັບປະກັນສະໜອງອາຫານເຄື່ອງໃຊ້ສອຍໃຫ້ພຽງພໍ<br>- ຄຸ້ມຄອງການຮົ່ວໄຫຼບັນດາສານເຄມີຕ່າງໆ ໑ ລະອອກມາດຕະການຄຸ້ມຄອງ | - ອຳນວຍຄວາມສະດວກໃນການ ນຳເຂົ້າ,ແນວພັນພືດເພື່ອຟື້ນຟູການພະລິດໃຫ້ຄືນສູ່ສະພາບປົກກະຕິ.<br>- ກວດກາຜົນເສຍຫາຍຂອງໂຮງຈັກໂຮງງານຕ່າງໆພ້ອມທັງຊອກ ວິທີສ້ອມແຊມຄືນ. |

### 4.2.8. ພະແນກແຜນການ ແລະ ການລົງທຶນ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ສ້າງແຜນພັດທະນາເສດຖະກິດຂອງແຂວງ,ໂດຍຕິດພັນກັບແຜນ ປ້ອງກັນໄພພິບັດ.<br>- ແຜນແມ່ບົດ 20 ປີ ເຖິງ 2020<br>- ແຜນ 5 ປີ, 1 ປີ<br>- ລົງທຶນໃສ່ການກໍ່ສ້າງຈຳນວນໜຶ່ງເພື່ອຕອບໂຕ້ການເຈື່ອນຂອງດິນ,ຄອງລະບາຍນ້ຳອື່ນໆ. | - ສ້າງແຜນເລັ່ງລັດສະເໜີລັດຖະບານເພື່ອຂໍທຶນຊ່ວຍເຫຼືອ ຈາກພາກລັດເອກກະຊົນແລະສາກົນ<br>- ເຂົ້າຮ່ວມກັບຂະແໜງການຕ່າງໆໃນການລົງຊ່ວຍເຫຼືອປະຊາຊົນ ແລະ ລະດົມທຶນ | - ສົມທົບກັບຂະແໜງກ່ຽວຂ້ອງລົງສຳຫຼວດກວດກາຫາການເສຍຫາຍເພື່ອຂື້ນແຜນສ້ອມແຊມ |

### 4.2.9. ພະແນກ ຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ແຈ້ງຂ່າວເຕືອນໄພລ່ວງໜ້າ ໂດຍຜ່ານລະບົບໄປສະນີແລະໂທລະຄົມຕາມເຫດທີ່ເໝາະສົມ | - ຮີບຮ້ອນຊ່ວຍປະຊາຊົນໃຫ້ປອດໄພຈາກສະຖານທີ່ສ່ຽງ | - ກຽມພ້ອມພາຫະນະທາງເຮືອ,ແລະລົດເພື່ອຍົກຍ້າຍປະຊາຊົນໄປຢູ່ບ່ອນປອດໄພ |

### 4.2.10. ທະຫານແຂວງ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ກະກຽມກຳລັງທະຫານເພື່ອຕອບໂຕ້ຕໍ່ໄພພິບັດຈະເກີດຂຶ້ນ ແຜນ:<br>- ກຳລັງພົນ, ພາຫະນະຂົນສົ່ງ | - ນຳກຳລັງລົງຊ່ວຍກູ້ໄພໃນເຂດທີ່ເກີດໄພພິບັດ<br>- ຍົກຍ້າຍກຸ່ມສ່ຽງ ແລະ ອຸປະກອນໄປບ່ອນປອດໄພ | - ນຳກຳລັງຊ່ວຍຟື້ນຟູເຂດທີ່ເປ່ເພ |

### 4.2.11. ສະຫະພັນແມ່ຍິງ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ປະຊຸມຄະນະກຳມະການຕ້ານພພິບັດ ແລະວາງແຜນຮັບມື<br>- ໂຄສະນາຕໍ່ສະພາບໄພພິບັດໃຫ້ເອື້ອຍນ້ອງແມ່ຍິງໄດ້ເອົາໃຈໃສ່ ຕໍ່ເຫດການດັ່ງກ່າວ. | - ລົງໂຄສະນາຊ່ວຍເຫຼືອຕາມຄວາມສາມາດ ແລະໃຫ້ການແນະນຳແກ່ແມ່ຍິງໃນການຫຼີກ໌ລ່ຽງໄພພິບັດ | - ລົງຢ້ຽມຢາມໃຫ້ກຳລັງໃຈ ແລະຖາມເຖິງສຸຂະພາບແມ່ຍິງໃນເຂດສ່ຽງໄພ |

### ກຳລັງປ້ອງກັນຄວາມສະຫງົບ (ປກສ)

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫຼັງໄພພິບັດ |
|---|---|---|
| - ແຈ້ງການຫາກົມກອງເພື່ອເຕືອນພໍ່ແມ່ປະຊາຊົນໃຫ້ກະກຽມຕ້ານໄພພິບັດ.<br>- ຊອກແຫຼ່ງ,ສະຖານທີ່ຫຼົບຫຼີກແກ່ປະຊາຊົນເພື່ອຫຼີກລ້ຽງໄພພິບັດ | -ຈັດກຳລັງກວດກາຜົນກະທົບເພື່ອຊ່ວຍໃຫ້ທັນເວລາ<br>- ຮຽກປະຊຸມວິຊາການເພື່ອຈັດກຳລັງແລະພາຫະນະ<br>- ຍົກຍ້າຍປະຊາຊົນ,ສິ່ງຂອງໄປຢູ່ບ່ອນປອດໄພ. | - ສະຫຼຸບແລະລາຍງານຜົນກະທົບແກ່ຂັ້ນນຳ.<br>- ລະດົມກຳລັງຊ່ວຍປະຊາຊົນ: ການປຸກສ້າງ,..<br>- ຊ່ວຍເຫຼືອຕາມຄວາມສາມາດ |

### 4.3 ຫ້ອງຄອບຄຸ້ມໄພນ້ຳຖ້ວມຢູ່ໃນລະດັບແຂວງ

ຫ້ອງການຄຸ້ມຄຸມໄພນ້ຳຖ້ວມແມ່ນໃຈກາງໃນການປະສານກ່ຽວກັບໄພນ້ຳຖ້ວມກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນການທ້າງຫາກະກຽມ ເພື່ອຕອບໂຕ້ກັບຕ້ານໄພນ້ຳຖ້ວມທີ່ອາດຈະເກີດ ພ້ອມກັນນັ້ນກໍ່ຍັງເປັນຫ້ອງຄວບຄຸ້ມແຜນການ - ຂຶ້ນແຜນການງົບປະມານໃນໄລຍະກ່ອນ, ລະຫວ່າງ ແລະໄລຍະຟື້ນຟູ.

- **ລາຍຊື່ບັນດາພະນັກງານຫ້ອງຄອບຄຸ້ມໄພນ້ຳຖ້ວມຂອງແຂວງ**

1. ທ່ານ ບຸນຖາວອນ ສີສຸພັນທອງ ຜູ້ປະສານງານ ພະແນກ ຮ ສ ສ ແຂວງ ເປັນຫົວໜ້າ
2. ທ່ານ ສົມຫວັງ ສຸວັນທອງ ວິຊາການຫ້ອງການຊາວໜຸ່ມແຂວງ ເປັນຮອງ
3. ທ່ານ ພັນຕີ ຄຳພອນ ສີກຸມພົນ ຮອງປ້ອງກັນຄວາມສະຫງົບ ເປັນກຳມະການ
4. ທ່ານ ບຸນມີ ສີບຸນເຮືອງ ວິຊາການພະແນກກະສິກຳ - ປ່າໄມ້ ເປັນກຳມະການ
5. ທ່ານ ນາງ ອຸໄລວັນ ແສງສຸວັນນຸຣັກ ວິຊາການຈັດຕັ້ງ ພະແນກ ສຶກສາປະຈຳແຂວງ ເປັນກຳມະການ
6. ທ່ານ ນາງ ຈອມຈັນ ເພັດພູທອນ ການເງິນພະແນກ ຮ ສ ສ ແຂວງ ເປັນກຳມະການ

- **ບັນຊີຄວາມຕ້ອງການອຸປະກອນສຳລັບຫ້ອງຄອບຄຸ້ມໄພນ້ຳຖ້ວມຂັ້ນແຂວງ**

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | ໝາຍເຫດ |
|---|---|---|---|---|
| 1 | ຫ້ອງການ | ຫຼັງ | 1 | |
| 2 | ລົດກະບະ | ຄັນ | 2 | |
| 3 | ລົດຈັກພາກສະໜາມ | ຄັນ | 5 | |
| 4 | ຄອມພິວເຕີຄົບຊຸດ | ໜ່ວຍ | 3 | |
| 5 | ຄອມພິວເຕີ / Noet Book | ໜ່ວຍ | 2 | |
| 6 | ເຄື່ອງກ໋ອບເອກະສານ | ໜ່ວຍ | 1 | |
| 7 | ໂທລະສັບທາງໄກ | ໜ່ວຍ | 3 | |
| 8 | ໂທລະສັບຕັ້ງໂຕະ | ໜ່ວຍ | 2 | |
| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | ໝາຍເຫດ |
| 9 | ໂທລະໂຄ່ງ (ພາກສະໜາມ) | ໜ່ວຍ | 2 | |
| 10 | ກະດານຂາວ | ແຜ່ນ | 2 | |
| 11 | ເຄື່ອງສາຍ LCD | ໜ່ວຍ | 1 | |
| 12 | ກ້ອງຖ່າຍ VDO | ໜ່ວຍ | 2 | |
| 13 | ກ໋ອງຖ່າຍຮູບ | ໜ່ວຍ | 2 | |

5. **ມາດຕະການການຕຽມພ້ອມຕ້ານໄພນ້ຳຖ້ວມ.**

**ກິດຈະກຳການການຕຽມພ້ອມ.**

1. ເພີ່ມການສ້າງຈິດສຳນຶກແກ່ຊຸມຊົນກ່ຽວກັບວຽກງານໄພພິບັດ
2. ຕິດຕັ້ງລະບົບການພະຍາກອນ ແລະ ເຕືອນໄພລ່ວງໜ້າ
3. ແຜນການຍ້າຍຄົນ ແລະ ສັດລ້ຽງໄປບ່ອນທີ່ບ່ອນໄພ
4. ຫາງຫາກະກຽມພາຫະນະ (ເຮືອ, ລົດບັນທຸ, ເຕັນ ແລະ ອຸປະກອນຕ່າງໆ)

6. **ການປະຕິບັດການຕອບໂຕ້.**

**6.1 ການກະກຽມການຕອບໂຕ້.**

1. ຍຸດທະສາດການອົບພະຍົກ (ເຮືອ, ທີມງານຮັບຜິດຊອບ, ພາຫະນະອື່ນໆ)
2. ການຄຸ້ມຄອງເຂດປອດໄພ (ເຕັ້ນ, ອານາໄມ, ຄວາມປອດໄພ,ນ້ຳ ແລະສຸຂະອານາໄມ).
3. ການກະກຽມການສື່ສານ (ຕິດຕັ້ງລະບົບ, ຜູ້ຮັບຜິດຊອບ).
4. ການກະກຽມການຂົນສົ່ງທາງບົກ ແລະ ທາງນ້ຳ.
5. ການກະກຽມສຸກຂະພາບ ແລະ ຢາປິ່ນປົວພະຍາດຕ່າງໆເບື້ອງຕົ້ນ.
6. ເສີມຄວາມແຂງແກ່ນໃຫ້ຄັນຄູກັນນຳທຸກແຫ່ງທີ່ມີຄວາມສ່ຽງສູງ ເພື່ອປ້ອງກັນນ້ຳຖ້ວມ

**6.2 ການປະຕິບັດການຕອບໂຕ້.**

1. ການຕິດຕາມໄພອັນຕະລາຍ ແລະ ຄວາມສ່ຽງ (ສະຖານີຕິດຕາມທຸກແຫ່ງ).
2. ການປະຕິບັດ ແລະ ຄົ້ນຫາການກູ້ໄພ.
3. ການປະຕິບັດການອົບພະຍົກ.
4. ການຄຸ້ມຄອງເຂດປອດໄພ (ເຕັ້ນ, ຄວາມປອດໄພ, ນ້ຳ ແລະ ສຸຂະພິບານ).
5. ການປະຕິບັດການກ່ຽວກັບສຸຂະພາບ ແລະ ການແພດ (ສຶກສາ ແລະ ປິ່ນປົວ).
6. ຂໍ້ມູນ ຂ່າວສານ ແລະ ການລາຍງານ (ລາຍງານກ່ຽວກັບການຕິດຕາມ, ບົດລາຍງານຕີລາຄາເບື້ອງຕົ້ນ, ຕີລາຄາການເປ່ເພ ແລະ ຄວາມຕ້ອງການ).
7. ການປະຕິບັດການບັນເທົາທຸກໃນພາວະສຸກເສີນ.
8. ການກະຈາຍການພະຍາກອນ ແລະ ການເຕືອນໄພລ່ວງໜ້າ.
9. ການປະສານງານ.

**6.3 ຄູ່ມືສຳລັບທີມຄຸ້ມຄອງໄພພິບັດ**

1. ການຄົ້ນຫາ ແລະ ກູ້ໄພສຸກເສີນ
2. ການປະຖົມພະຍາບານເບື້ອງຕົ້ນ

3. ສຸຂະພາບ
4. ການປະສານງານບັນເທົາທຸກ
5. ການຄຸ້ມຄອງຂໍ້ມູນຂ່າວສານ
6. ທີມປະເມີນຜົນເສຍຫາຍ

**7. ການປັບປຸງເພື່ອໃຫ້ກັບຄືນສູ່ສະພາບເດີມ.**

**ກິດຈະກຳຂອງການປັບປຸງ ເພື່ອໃຫ້ກັບຄືນສູ່ສະພາບເດີມ.**

1. ຕີລາຄາຄວາມເສຍຫາຍຈາກໄພພິບັດຄັ້ງກ່ອນ ແລະ ຄວາມຕ້ອງການໃນຄັ້ງນີ້.
2. ແຜນເພື່ອໃຫ້ກັບຄືນສູ່ສະພາບເດີມ ໂດຍອີງໃສ່ການຕີລາຄາ ຄວາມຕ້ອງການ.
3. ເຊື່ອມຕໍ່ກັບແຜນພັດທະນາຂອງເມືອງ ແລະ ຂອງແຂວງ.
4. ຈັດຕັ້ງປະຕິບັດກ່ຽວກັບແຜນການບູລະນະ ແລະ ການກັບຄືນສູ່ສະພາບເດີມ.

**8. ມາດຕະການການລຶດຜ່ອນ (ໄລຍະສັ້ນ,ໄລຍະກາງ ແລະ ໄລຍະຍາວ)**

**8.1 ໂຄງສ້າງຂອງການລຶດຜ່ອນ.**

1. ກໍ່ສ້າງຄັນຄູປ້ອງກັນນ້ຳຖ້ວມ, ເຂື່ອນ, ຄອງສົ່ງນ້ຳ, ເຂດປອດໄພ ຊຸມຊົນ ແລະ ອື່ນໆ.
2. ປ້ອງກັນນ້ຳຖ້ວມ (ໂດຍການເສີມສ້າງຄວາມແຂງແກ່ນໃຫ້ອາຄານ, ແລະ ສິ່ງອຳນວຍຄວາມສະດວກຕ່າງໆໃນເຂດນ້ຳຖ້ວມ, ການຍົກພື້ນໃຫ້ສູງຂຶ້ນໃຫ້ແກ່ໂຄງສ້າງຢູ່ໃນເຂດ ມີໄພອັນຕະລາຍແລະ ອື່ນໆ).

**8.2 ການກຽມພ້ອມທາງດ້ານບໍ່ແມ່ນໂຄງສ້າງ.**

1. ປຸກຈິດສຳນຶກໃຫ້ປະຊາຊົນ/ ການກຈາຍຂ່າວສານ.
2. ສ້າງຕັ້ງອົງການຈັດຕັ້ງ (ການຮ່ວມມືໃນກຸ່ມຜູ້ທີ່ໄດ້ຮັບຜົນປະໂຫຍດ, ການປະສານກົງຈັກພາຍໃນແຂວງ ແລະ ການເຊື່ອມ ຍົງກັບແຫລ່ງ ຊັບພະຍາ ກອນພາຍນອກ)
3. ສຶກສາອົບຮົມ (ຫລັກສູດການສອນໃນໂຮງຮຽນ ແລະ ອື່ນໆ)
4. ຝຶກອົບຮົມ ການເສີມສ້າງຄວາມອາດສາມາດ (ການປຸກຈິສຳນຶກ, ການສອນ ລອຍນ້ຳ, ສ້າງຕັ້ງສູນລ້ຽງເດັກໃນພາວະສຸກເສີນ, ພາລະບົດບາດຂອງຜູ້ຍິງ ແລະ ອື່ນໆ).
5. ຕິດຕັ້ງລະບົບເຕືອນໄພລ່ວງໜ້າ.
6. ວາງແຜນນຳໃຊ້ທີ່ດິນ (ການປ່ຽນການປູກພືດ ແລະ ອື່ນໆ).
7. ສ້າງແຜນທີ່ນ້ຳຖ້ວມ ແລະ ແຜນທີ່ຄວາມສ່ຽງ.

9. ເລກໂທລະສັບທີ່ສຳຄັນ.

- **ສາມະຊິກຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ**

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ເບີໂທລະສັບ |
|---|---|---|---|
| 1 | ທ່ານ ໂອໃດ ສຸດາພອນ | ຮອງເຈົ້າແຂວງ | 020 9950003 |
| 2 | ທ່ານ ແສງທອງ ພະຄຸນທອງ | ຫົວໜ້າພະແນກ ຮສສ ແຂວງ | 020 5756621 |
| 3 | ທ່ານ ຄຳເຟືອງ ເທບພະກັນ | ຮອງຫົວໜ້າພະແນກກະສິກຳ | 020 5755650 |
| 4 | ທ່ານ ສີຫາງວນ ອິນທະລາດ | ຮອງຫົວໜ້າພະແນກແຜນການ | 020 5223315 |
| 5 | ທ່ານ ເກດສະໜາ ຣາຊະຈັກ | ຮອງຫົວໜ້າພະແນກສາທາ | 020 5650200 |

- **ເບີໂທລະສັບກອງເລຂາກອງເລຂາ.**

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ເບີໂທລະສັບ |
|---|---|---|---|
| 1 | ທ່ານ ບຸນມີ ສີບຸນເຮືອງ | ວິຊາການ ພ/ນ ກະສິກຳ | 020 5663210 |
| 2 | ນາງ ອຸໄລວັນ ແສງສຸວັນນຸຣັກ | ວິຊາການ ພ/ນ ສຶກສາ | 020 2325689 |

## ແຜນຈັດຕັ້ງປະຕິບັດກິດຈະກຳ 5 ປີ (2006 - 2010) ຢູ່ແຂວງຄຳມ່ວນ

| ກິດຈະກຳຈັດຕັ້ງປະຕິບັດ | ພື້ນທີ່ປະຕິບັດ (ເມືອງ,ບ້ານ) | ພະແນກການ ຮັບຜິດຊອບ | ເວລາຈັດຕັ້ງ ປະຕິບັດ | ງົບປະມານ ລ້ານກີບ |
|---|---|---|---|---|
| - ກອງປະຊຸມ DDMC, PDMC ໃຫ້ຄວາມຮູ້ກ່ຽວກັບການຄຸ້ມຄອງໄພພິບັດ | province 9 District | PDMC | 2006 2010 | 90,00 |
| ສ້າງຕັ້ງຄະນະຄຸ້ມຄອງໄພພິບັດຂັ້ນເມືອງບ້ານ ພ້ອມທັງຝຶກອົບຮົມ | 9 District 50 ບ້ານທີ່ມີຄວາມສ່ຽງ | PDMC DDMC | 2006 2010 | 60,00 |
| ເກັບກຳຂໍ້ມູນຜົນກະທົບທີ່ຜ່ານມາ ແລະ ສ້າງແຜນການ | 9 District | PDMC, DDMC | 2006 2010 | 200,00 |
| ສ້າງລະບົບຕິດຕາມສະພາບແວດລ້ອມ,ປະເມີນເຫດການຜົນກະທົບ | 9 District 50 ບ້ານ | Social welfare Dpt, agriculture Dpt | 2006 2010 | 100,00 |
| ສ້າງເຄືອຄ່າຍການກະຈາຍ ຂ່າວ | 9 District 50 ບ້ານ | PDMC Cultural | 2006 2010 | 150,00 |
| ກະກຽມ ແລະ ຈັດຊື້ອຸປະກອນຕ່າງໆເພື່ອຕອບໂຕ້ ໄພພິບັດ | 9 District Province | PDMC, DDMC | 2006 2010 | 250,00 |
| ໂຄສະນາປຸກຈິດສຳກກ່ຽວໄພພິບັດ ແລະ ການທ້າງຫາກະກຽມ | 9 District | Cultural PDMC DDMC | 2006 2010 | 50,00 |
| ສ້າງຕັ້ງໜ່ວຍງານແພດ ແລະ ຮັບຜິດຊອບການກູ້ໄພ | 9 District , Province | Health Dpt | 2006 2010 | 100,00 |
| ສ້າງຕັ້ງທີມງານກູ້ໄພເຄື່ອນຍ້າຍຜູ້ປະສົບໄພ | 9 District | ກາແດງ ປ.ກ.ສ ປ.ກ.ຊ | 2006 2010 | 70,00 |
| ຈັດສັນ ແລະ ຫາແຫຼ່ງທຶ ເພື່ອຊ່ວຍເຫຼືອຜູ້ຖືກຜົກະທົບ | 9 District Province | ກາເງິນແຂວງ | 2006 2010 | 90,00 |
| ນຳຫຼັກສູດໄພພິບັດເຂົ້າໃນໂຮງຮຽນ | 9 District 100 ແຫ່ງ | Education Dpt | 2006 2010 | 100,00 |
| ຝຶກອົບຮົມກຸ່ມທີ່ມີຄວາມຕ້ານທານຕ່ຳ | 9 District 150 ບ້ານ | PDMC DDMC | 2006 2010 | 50,00 |
| ທົດແທນຟື້ນຟູສິ່ງທີ່ຖືກເສຍ ຫາຍ | Flood Areas 9 District | Cultural PDMC DDMC | 2006 2010 | 350,00 |

| | | | | |
|---|---|---|---|---|
| ປະຊຸມປຶກສາຫາລືລະຫວ່າງແຂວງຕໍ່ແຂວງກ່ຽວບັນຫາໄພພິບັດລະຫວ່າງຊາຍແດນ | KM Province 2 ຄັ້ງຕໍ່ປີ | PDMC | 2006 2010 | 50,00 |
| ສ້າງສາງເກັບມ້ຽນສະບຽບອາຫານວັດຖຸທີ່ຈຳເປັນ ແລະ ກຳນົດສະຖານພັກຊົ່ວຄາວທີ່ປອດໄພເວລາເກີດໄພພິບັດ | Province | Social welfare Dpt | 2006 2010 | 1.000,00 |
| ກອງທຶນພັດທະນາບ້ານ | 9 District | Women Union, Agriculture Dpt | 2006 2010 | 500,00 |
| **ລວມ :** | | | | **3.210,00** |

## ແຜນຈັດຕັ້ງປະຕິບັດກິດຈະກໍາ 1 ປີ (2007 - 2008) ຢູ່ແຂວງຄໍາມ່ວນ

| ກິດຈະກໍາຈັດຕັ້ງປະຕິບັດ | ພື້ນທີ່ປະຕິບັດ (ເມືອງ,ບ້ານ) | ພະແນກການ ຮັບຜິດຊອບ | ເວລາຈັດຕັ້ງ ປະຕິບັດ | ງົບປະມານ ລ້ານກີບ |
|---|---|---|---|---|
| - ກອງປະຊຸມ DDMC, PDMC ໃຫ້ຄວາມຮູ້ກ່ຽວກັບການຄຸ້ມຄອງໄພພິບັດ | province 3 District | PDMC | 2007 2008 | 10,00 |
| ສ້າງຕັ້ງຄະນະຄຸ້ມຄອງໄພພິບັດຂັ້ນບ້ານ ພ້ອມທັງຝຶກອົບຮົມ | 4 District 25 ບ້ານ | DDMC | 2007 2008 | 6,00 |
| ສ້າງລະບົບຕິດຕາມສະພາບແວດລ້ອມ,ປະເມີເພດການຜົນກະທົບ | 3 District 10 ບ້ານ | Social welfare Dpt, agriculture Dpt | 2007 2008 | 20,00 |
| ໂຄສະນາປຸກຈິດສໍານຶກກ່ຽວໄພພິບັດ ແລະ ການທ້າງທາກະກຽມ | 3 District | Cultural PDMC DDMC | 2007 2008 | 15,00 |
| ເກັບກໍາຂໍ້ມູນຜູ້ປະສົບໄພຜ່ານ ແລະ ສ້າງແຜນການ | 3 ເມືອງ | PDMC DDMC | 2007 2008 | 50,00 |
| ສ້າງເຄືອຄ່າຍການກະຈາຍ ຂ່າວ | 3 District 5 ບ້ານ | PDMC Cultural | 2007 2008 | 30,00 |
| ສ້າງຕັ້ງໜ່ວຍງານແພດ ແລະ ຮັບຜິດຊອບການກູ້ໄພ | 3 District , Province | Health Dpt | 2007 2008 | 20,00 |
| ສ້າງຕັ້ງທີມງານກູ້ໄພເຄື່ອຍ້າຍຜູ້ປະສົບໄພ | 3 District | ກາແດງ ປ.ກ.ສ ປ.ກ.ຊ | 2007 2008 | 10,00 |
| ນໍາຫຼັກສູດໄພພິບັດເຂົ້າໃນໂຮງຮຽນ | 3 District 20 ແຫ່ງ | Education Dpt | 2007 2008 | 40,00 |
| **ລວມ :** | | | | **210,00** |